M-POWER

Mekong Program on Water
Environment and Resilience



ນັກຄົ້ນຄວ້າທີ່ດຳເນີນວຽກງານຕົວຈິງ I ມີການປຶກສາຫາລືກັບຜູ້ອຳນວຍຄວາມສະດວກ I ຄົນກາງທີ່ມີຄວາມຮູ້



# ບົດນຳທາງດ້ານຍຸດທະສາດ ຂອງ M-POWER ປັບປຸງ 2011







ຂໍ້ມູນກ່ຽວກັບປຶ້ມນໍາດັ່ງກ່າວນີ້, ແຜນງານຂອງແມ່ນໍ້າຂອງວ່າດ້ວຍນໍ້າ, ສິ່ງແວດລ້ອມ ແລະ ຄວາມສາມາດໃນການກັບສູ່ສະພາບເດີມ (M-POWER) ແມ່ນເຄືອຂ່າຍຂອງ ການຈັດຕັ້ງ ແລະ ບຸກຄົນ ທີ່ມີການປະສານງານກັນໃນການດໍາເນີນວຽກງານ ເພື່ອການປົກຄອງບໍລິຫານນໍ້າ ແບບປະຊາທິປະໄຕ ຢູ່ໃນພາກພື້ນແມ່ນໍ້າຂອງ.

ປຶ້ມນໍາ M-POWER ໄດ້ຍົກໃຫ້ເຫັນແຜນງານຂອງພວກເຮົາ ໃນການສຶກສາຄົ້ນຄວ້າໃນວຽກງານຕົວຈິງ, ອໍານວຍຄວາມສະດວກໃຫ້ແກ່ການປຶກສາຫາລື ແລະ ເປັນສື່ກາງທາງດ້ານຄວາມຮູ້. ແຜນງານນີ້ ໄດ້ສ້າງຂຶ້ນບົນພື້ນຖານຄວາມສໍາເລັດ ຜ່ານມາຂອງພວກເຮົາ ແລະ ໄດ້ນໍາເອົາບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີຈາກການຈັດຕັ້ງປະຕິບັດວຽກງານຂອງພວກເຮົາຕັ້ງແຕ່ ປີ 2004 ເປັນຕົ້ນມາ.

ພວກເຮົາຈະສືບຕໍ່ທົບທວນ ປຶ້ມນໍາດັ່ງກ່າວນີ້ ເພື່ອໃຫ້ສາມາດແກ້ໄຂບັນຫາບູລິມະສິດ ທີ່ເກີດຂຶ້ນໃນລະດັບພາກພື້ນ ແລະ ເພື່ອຜົນປະໂຫຍດ ຂອງສະມາຊິກໃນເຄືອຂ່າຍຂອງພວກເຮົາ, ພ້ອມທັງຮຽນຮູ້ວິທີທາງທີ່ດີຂຶ້ນ ໃນການສຶກສາຄົ້ນຄວ້າ ແລະ ເຂົ້າຮ່ວມໃນວຽກງານ ທີ່ມີຄວາມທ້າທາຍກ່ຽວກັບການປົກຄອງບໍລິຫານນໍ້າ. ປຶ້ມນໍາດັ່ງກ່າວນີ້ ເລີ່ມດ້ວຍບົດສະເໜີຂໍ້ມູນພື້ນຖານກ່ຽວກັບ M-POWER (ໃນໝວດທີ່ 1). ຫລັງຈາກນັ້ນ ພວກເຮົາໄດ້ມີການກໍານົດວິໄສທັດ, ວຽກງານ, ຂໍ້ມູນກ່ຽວກັບການດໍາເນີນວຽກງານຂອງພວກເຮົາ ແລະ ຫລັກການທີ່ເປັນທິດຊີ້ນໍາ (ໃນໝວດທີ່ 2), ຕິດຕາມດ້ວຍຈຸດປະສົງ ແລະ ເປົ້າໝາຍສະເພາະຂອງພວກເຮົາ (ໃນໝວດທີ່ 3).

ພວກເຮົາໄດ້ຊີ້ໃຫ້ເຫັນ ໂຄງສ້າງຂອງລະບົບດໍາເນີນວຽກງານ ແລະ ຫົວຂໍ້ ທີ່ເປັນທິດຊີ້ນໍາໃນການສຶກສາຄົ້ນຄວ້າ, ການປຶກສາຫາລື ແລະ ວຽກງານທີ່ມີຄົນກາງເຊື່ອມຕໍ່ທາງດ້ານຄວາມຮູ້ (ຢູ່ໃນໝວດທີ່ 4), ແລະ ສຸດທ້າຍໄດ້ມີການຊີ້ໃຫ້ເຫັນເຖິງ ບັນດາໂຄງການທີ່ສໍາຄັນ ແລະ ກໍລະນີສຶກສາ ທີ່ອີງໃສ່ວຽກງານຕົວຈິງ (ໃນໝວດທີ່ 5).

ການຄຸ້ມຄອງເຄືອຂ່າຍ ແລະ ໂອກາດອື່ນໆ ໃນການເຂົ້າຮ່ວມວຽກງານໃນ M-POWER ໄດ້ຖືກສັງລວມຢູ່ໃນ (ໝວດທີ່ 6). ພວກເຮົາສະຫລຸບເອກະສານສະບັບນີ້ ດ້ວຍການຊີ້ໃຫ້ເຫັນຍຸດທະສາດທີ່ສໍາຄັນ ຊຶ່ງພວກເຮົານໍາໃຊ້ ເພື່ອໃຫ້ສໍາເລັດວຽກງານ ຕາມວິໄສທັດ ທີ່ກໍານົດໄວ້ຢູ່ໃນປຶ້ມນໍາສະບັບນີ້ (ໃນໝວດທີ່ 7).

ກະລຸນາສະເໜີຄວາມຄິດ ຂອງພວກທ່ານ ເພື່ອປັບປຸງປຶ້ມນໍາຄັ້ງຕໍ່ໄປແກ່ຜູ້ຮັບຜິດຊອບວຽກງານຂອງພວກເຮົາຄືດັ່ງລຸ່ມນີ້:

## CONTACT


Kate Lazarus
M-POWER Coordinator
PO Box 6266
Vientiane, Laos
Email: katelazarus2008@gmail.com
Mobile (Lao PDR): +856 20 7786 2989
Skype: Katelaz
Websites: www.mpowernetwork.org



ຫົວຂໍ້ຂອງການຈັດພິມ: ປຶ້ມນໍາດ້ານຍຸດທະສາດ ຂອງ M-POWER 2011, ແຜນງານຂອງແມ່ນໍ້າຂອງ ວ່າດ້ວຍນໍ້າ, ສິ່ງແວດລ້ອມ ແລະ ຄວາມສາມາດໃນການກັບສູ່ສະພາບເດີມ

ນະຄອນຫລວງວຽງຈັນ, ສ ປປ ລາວ



© 2011 M-POWER


## Cover photos

**From top left to right: Kate Lazarus, Louis Lebel, Truong Van Vi, Louis Lebel**

## ສາລະບານ


1. ບົດສະເໜີ 1

2. ສັງລວມເນື້ອໃນ 3

    ວິໄສທັດ

    ໜ້າທີ່ວຽກງານ

    ຂໍ້ມູນກ່ຽວກັບວຽກງານ

    ຫລັກການທີ່ເປັນທິດຊີ້ນຳ

3. ຈຸດປະສົງ ແລະ ເປົ້າໝາຍ 4

    ຈຸດປະສົງ

    ເປົ້າໝາຍສະເພາະ

4. ແຜນງານກ່ຽວກັບການສຶກສາຄົ້ນຄວ້າ 5

    ລະບົບດຳເນີນວຽກງານ

    ຫົວຂໍ້

        ການປຶກສາຫາລື

        ສະຖາບັນ

        ຄວາມຮູ້ ແລະ ຄວາມສາມາດ

        ຄວາມຍຸຕິທຳ ຂອງສັງຄົມ

        ຄວາມປອດໄພຂອງມະນຸດ

5. ກິດຈະກຳ 9

    ການປົກຄອງບໍລິຫານນ້ຳແບບປະຊາທິປະໄຕ 2010 - 2012

    ການປຶກສາຫາລືແບບຮອບຄອບ 2004+

    ການປັບປຸງການປະເມີນຜົນຂອງ ໄຟຟ້ານ້ຳຕົກ 2009+

    ການສຳຫຼວດອານາຄົດ ຂອງພາກພື້ນແມ່ນ້ຳຂອງ 2010-2012

    Twin2Go - ແມ່ນ້ຳຂອງ 2010

    ຄະນະຊ່ຽວຊານ 2010+

    ທີມງານສຳຫຼວດ 2007+

    ການຊອກຫາແຫລ່ງທຶນ

6. ການເຂົ້າຮ່ວມວຽກງານໃນ M-POWER 13

    ການຄຸ້ມຄອງເຄືອຂ່າຍ

    ຄະນະກຳມະການຊີ້ນຳ M-POWER

    ຜູ້ປະສານງານ M-POWER

    ການເຂົ້າຮ່ວມວຽກງານ ກັບ M-POWER

    ການເປັນຜູ້ເຂົ້າຮ່ວມວຽກງານ

    ກຸ່ມນັກສຶກສາຄົ້ນຄວ້າ

    ອາສາສະໝັກ

    ການເຂົ້າຮ່ວມວຽກງານ ໃນເວລາຈັດກອງປະຊຸມ ເຄືອຂ່າຍປະຈຳປີ

7. ຍຸດທະສາດທີ່ສຳຄັນ 17
ການດຶງດູດຜູ້ຕັດສິນບັນຫາ ແລະ ຜູ້ມີອິດທິພົນເຂົ້າຮ່ວມວຽກງານ
ການແລກປ່ຽນ ແລະ ການສື່ສານຂໍ້ມູນ
Mekong Research Listserve
ອິນເຕີເນັດ
ການສ້າງຜະລິດຕະພັນ ແລະ ເອກະສານຕ່າງໆ
ການສົ່ງເສີມການສຶກສາຄົ້ນຄວ້າ ຢູ່ຂັ້ນພື້ນຖານ
ການຍົກລະດັບຄວາມສາມາດຢູ່ໃນລະດັບພາກພື້ນ

## 1. ບົດສະເໜີ

M-POWER ຫຼື ແຜນງານແມ່ນ້ຳຂອງກ່ຽວກັບ ສິ່ງແວດລ້ອມ ແລະ ການຟື້ນຕົວ ຂອງນ້ຳ ແມ່ນລິເລີ່ມໃນປີ 2004 ໂດຍການເປັນເຄືອຂ່າຍທາງດ້ານຄວາມຮູ້ ເຊິ່ງມີສະມາຊິກຈາກ 6 ປະເທດ ຂອງເຂດແມ່ນ້ຳຂອງ ທີ່ກວມເອົາ ດິນແດນ, ລະບົບນິເວດ, ປະຊາຊົນ, ເສດຖະກິດ ແລະ ການເມືອງ ຂອງປະເທດກຳປູເຈຍ, ສປປ ລາວ, ພະມ້າ, ໄທ, ຫວຽດນາມ ແລະ ແຂວງຢູນນານ ຂອງປະເທດຈີນ. ແຜນງານດັ່ງກ່າວນີ້ ໃນເບື້ອງຕົ້ນແມ່ນບໍ່ມີການສະໜອງທຶນ; ການສະໜອງທຶນດັ່ງກ່າວ ແມ່ນໄດ້ຮັບຫລັງຈາກນັ້ນ.

ພວກເຮົາເປັນເຄືອຂ່າຍຂອງນັກປະສານງານ ເຊິ່ງໄດ້ມີການສຶກສາຄົ້ນຄວ້າ ໂດຍອີງໃສ່ວຽກງານຕົວຈິງ, ຊຸກຍູ້ໃຫ້ມີການປະສານງານ ແລະ ມີການສ້າງເຄືອຂ່າຍທາງດ້ານຄວາມຮູ້ ເພື່ອປັບປຸງ ການປົກຄອງບໍລິຫານນ້ຳ ຢູ່ໃນພາກພື້ນແມ່ນ້ຳຂອງ ດ້ວຍວິທີທາງທີ່ສາມາດ ສະໜັບສະໜູນການດຳລົງຊີວິດ, ສຸຂະພາບຂອງຊຸມຊົນ ແລະ ລະບົບນິເວດ ທີ່ຍືນຍົງ.

ເປົ້າໝາຍຕົ້ນຕໍຂອງເຄືອຂ່າຍ ຂອງພວກເຮົາແມ່ນເພື່ອການດຳເນີນວຽກງານປົກກະຕິ ທີ່ເປັນທາງເລືອກ ແລະ ການຕັດສິນບັນຫາກ່ຽວກັບນ້ຳ ທີ່ສຳຄັນໃນລະດັບຊາດ ແລະ ລະດັບສາກົນ ທີ່ໄດ້ຖືກສຶກສາຄົ້ນຄວ້າ ຢ່າງເປີດເຜີຍ. ຈຸດປະສົງສຳຄັນອີກອັນໜຶ່ງ ແມ່ນເພື່ອສະໜັບສະໜູນ ການພັດທະນາ ນັກຄົ້ນຄວ້າ ດ້ານການປົກຄອງບໍລິຫານ ເຊິ່ງມີປະສົບການຢູ່ໃນລະດັບພາກພື້ນ.

M-POWER ໄດ້ມີການຕັດສິນໃຈ ໃນການຄັດເລືອກວຽກງານ ເພື່ອສຸມໃສ່ໃນລະດັບພາກພື້ນ ທີ່ມີລັກສະນະກວ້າງຂວາງກວ່າ, ຊຶ່ງລວມເອົາອ່າງໂຕ່ງໃນລະດັບສາກົນ ແລະ ລະດັບປະເທດຈຳນວນໜຶ່ງ, ແທນທີ່ຈະສຸມໃສ່ອ່າງໂຕ່ງແມ່ນ້ຳຂອງເທົ່ານັ້ນ ແລະ ດັ່ງນັ້ນ ຂົງເຂດວຽກງານ ຈຶ່ງອາດຈະພາໃຫ້ມີການເຂົ້າຮ່ວມວຽກງານຫຼາຍເກີນໄປ ຫລື ອອກຈາກຂອບເຂດຂອງວຽກງານຫຼາຍເກີນໄປ ຊຶ່ງດຳເນີນໄປໃນຂົງເຂດພູມມີພາກ ທີ່ມີລະບົບການເມືອງທີ່ແຕກຕ່າງກັນ.

ວຽກງານຂອງ M-POWER ໄດ້ຮັບການສະໜັບສະໜູນຈາກເຄືອຂ່າຍຂອງ ອົງການຈັດຕັ້ງເພື່ອຮ່ວມງານ 30 ອົງການ. ສະມາຊິກ ສ່ວນຫຼາຍແມ່ນມາຈາກ ອົງການຈັດຕັ້ງທາງດ້ານການສຶກສາ ແລະ ບໍ່ແມ່ນໜ່ວຍງານຂອງລັດຖະບານ, ແຕ່ຂນກັບອົງການຈັດຕັ້ງສາກົນ ແລະ ອົງການຂອງລັດຖະບານ. ເຄືອຂ່າຍດັ່ງກ່າວໄດ້ຮັບການສະໜອງທຶນຈາກຫຼາຍແຫ່ງ, ລວມທັງ Echel Fau, ກອງທຶນສາກົນ ເພື່ອການພັດທະນາກະສິກຳ (IFAD), ອົງການຮ່ວມມືເພື່ອການພັດທະນາສາກົນ ຂອງປະເທດ ອົດສະຕາລີ (AusAID) ໂດຍຜ່ານແຜນງານ ເພື່ອແກ້ໄຂຄວາມທ້າທາຍ ກ່ຽວກັບນ້ຳ ແລະ ອາຫານ, Blue Moon, ອົງການຮ່ວມເພື່ອການພັດທະນາສາກົນຂອງປະເທດ ສະວີເດັນ (Sida) ສຳລັບວຽກງານຂອງອົງການ ແຕ່ສ່ວນຫຼາຍແມ່ນອີງໃສ່ ການປະກອບສ່ວນແບບສະໝັກໃຈຂອງ ບັນດາເພື່ອຮ່ວມງານຂອງອົງການ.

ການຮ່ວມມືຄັ້ງໃຫຍ່ໃນຄັ້ງທຳອິດ ຂອງ M-POWER ແມ່ນມີຂຶ້ນໃນເດືອນ ພະຈິກ ປີ 2004 ຊຶ່ງສະມາຊິກຂອງເຄືອຂ່າຍ ໄດ້ມີການຈັດກອງປະຊຸມ, ອຳນວຍຄວາມສະດວກ ແລະ ໃຫ້ການປະກອບສ່ວນ ທາງດ້ານຄວາມຮູ້ ໃຫ້ແກ່ກອງປະຊຸມໂຕະມົນໃນລະດັບສູງ ກ່ຽວກັບ "ການນຳໃຊ້ນ້ຳ, ການເອົາໃຈໃສ່ຕໍ່ສິ່ງແວດລ້ອມ: ສິ່ງທ້າທາຍສຳລັບແມ່ນ້ຳຂອງ ໃນກອງປະຊຸມວ່າດ້ວຍການອະນຸລັກ ຂອງໂລກ ທີ່ຈັດຂຶ້ນຢູ່ ບາງກອກ ປະເທດໄທ. ກອງປະຊຸມດັ່ງກ່າວນັ້ນໄດ້ມີການເຂົ້າຮ່ວມຂອງບັນດາລັດຖະມົນຕີ ຈາກ 5 ປະເທດ ແມ່ນ້ຳຂອງ (ແຕ່ບໍ່ມີລັດຖະມົນຕີຈາກປະເທດ ພະມ້າ) ແລະ ຜູ້ເຂົ້າຮ່ວມທີ່ບໍ່ແມ່ນອົງການຂອງລັດ. ບັນຫາທີ່ລະອຽດອ່ອນໄດ້ຖືກນຳມາສຶກສາຄົ້ນຄວ້າ: ປະເທດໄທ ໄດ້ສະເໜີ ໃຫ້ມີສາຍສົ່ງໃຕ້ນ້ຳ, ແຜນການສຳລັບການສ້າງໄຟຟ້ານ້ຳຕົກຢູ່ ແມ່ນ້ຳ Nu-Salween ແລະ ໄພຂົ່ມຂູ່ທີ່ມີຕໍ່ລະບົບນິເວດຂອງທົ່ງເລຊາບ.

ຄຳສັບ M-POWER ໄດ້ເນັ້ນໜັກໃສ່ຄຳສັບ Power ຊຶ່ງມີຄວາມໝາຍວ່າໄດ້ໃຫ້ຄຸນນະພາບ ຫລື ຄວາມສາມາດໃນການເຮັດສິ່ງໃດໜຶ່ງ. ຄຳສັບດັ່ງກ່າວນີ້ ໄດ້ເນັ້ນໃສ່ຄວາມມຸ້ງຫວັງຂອງພວກເຮົາ ໃນການເຂົ້າຮ່ວມການສຶກສາຄົ້ນຄວ້າ ກ່ຽວກັບການປົກຄອງບໍລິຫານນ້ຳ ແລະ ຈຸດປະສົງຂອງພວກເຮົາໃນການອຳນວຍຄວາມສະດວກ ແລະ ສືບຕໍ່ປັບປຸງວຽກງານ ຢູ່ໃນໂຊງເຂດພາກພື້ນແມ່ນ້ຳຂອງ, ແຕ່ລະອົງປະກອບຂອງສັບນີ້ ສາມາດນຳມາຜັນຂະຫຍາຍດັ່ງຕໍ່ໄປນີ້.

- **ແມ່ຂອງ** ແມ່ນໝາຍເຖິງ ພາກພື້ນທີ່ກວ້າງຂວາງ ຂອງດິນແດນອາຊີຕາເວັນອອກສ່ຽງໃຕ້ ຊຶ່ງກວມເອົາແມ່ນ້ຳຂອງ, ແມ່ນ້ຳ ອີລາວະດີ, ແມ່ນ້ຳຊາວວີ, ແມ່ນ້ຳເຈົ້າພະຍາ, ແມ່ນ້ຳແດງ ແລະ ອ່າງໂຕ່ງຂະໜາດນ້ອຍກວ່າ ທີ່ຢູ່ໃນ ລະຫວ່າງກາງຂອງບັນດາແມ່ນ້ຳເລົ່ານີ້ (ເບິ່ງຮູບພາບທີ່ 1);
- **ແຜນງານ** ໝາຍເຖິງ ບັນດາວຽກງານທີ່ມີສ່ວນ ພົວພັນກັນກ່ຽວກັບ ການສຶກສາຄົ້ນຄວ້າ, ການອຳນວຍຄວາມສະດວກ ເພື່ອການປຶກສາຫາລື ແລະ ວຽກງານເພື່ອການສ້າງເຄືອຂ່າຍຄວາມຮູ້ ຊຶ່ງມີຂອບເຂດກວ້າງກວ່າ ໂຄງການ ຫລື ການຊ່ວຍເຫລືອໃດໜຶ່ງ;
- **ນ້ຳ** ໝາຍເຖິງ ນ້ຳຢູ່ໃນດິນແດນ ໃດໜຶ່ງເຊິ່ງເປັນແຫລ່ງຊັບພະຍາກອນທີ່ມີເປົ້າໝາຍດ້ານຕ່າງໆ ສຳລັບວຽກງານ ໃນການດຳລົງຊີວິດ, ໄພຂົ່ມຂູ່ ຫລື ໄພທຳມະຊາດ (ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ການໄຫລ ແລະ ການສະສົມ ແລະ ການໄຫລຂອງຕະກອນ), ວິທີທາງໃນການສ້າງພະລັງງານ (ໄຟຟ້ານ້ຳຕົກ) ຫລື ຄວາມສຳຄັນໃນໄລຍະກາງສຳລັບ ສິ່ງທີ່ມີຊີວິດໃນນ້ຳ;
- **ສິ່ງແວດລ້ອມ** ໝາຍເຖິງ ທຸກສິ່ງ ທຸກຢ່າງທີ່ມີຊີວິດ (ເປັນຕົ້ນ: ຄົນ, ປາ, ສັດປ່າ) ແລະ ສິ່ງບໍ່ມີຊີວິດ (ເປັນຕົ້ນ: ເຂື່ອນກັ້ນນ້ຳ, ລະບົບຊົນລະປະທານ, ສາຍໄຟຟ້າ) ທີ່ເປັນອົງປະກອບຂອງໂລກ;
- **ຄວາມສາມາດໃນການການຟື້ນຕົວ** ໝາຍເຖິງ ການຮັກສາຄວາມສາມາດ ເພື່ອປັບຕົວເຂົ້າກັບ ແລະ ຮັບມືກັບ ວຽກງານທີ່ເກີດຈາກການກະທຳຂອງມະນຸດ ແລະ ການປ່ຽນແປງທາງທຳມະຊາດ ຢູ່ໃນສະພາບແວດລ້ອມ ແລະ ສັງຄົມ ທີ່ມີການປ່ຽນແປງ, ມີຫຼາຍຂະໜາດ ແລະ ມີສ່ວນພົວພັນຊຶ່ງກັນ ແລະ ກັນ.

ຮູບພາບທີ່ 1 ຂົງເຂດແມ່ນ້ຳຂອງ




SOURCE: Map No. 4112, Rev. 2. January 2004. United Nations Cartographic Section, New York, US

## 2. ສັງລວມເນື້ອໃນ

ໝວດນີ້ຂອງເອກະສານໄດ້ສະເໜີໃຫ້ເຫັນ ວິໄສທັດ ແລະ ໜ້າທີ່ວຽກງານຂອງ M-POWER ລວມທັງການລາຍງານກ່ຽວກັບວຽກງານ ຊຶ່ງຊີ້ໃຫ້ເຫັນຄວາມມຸ້ງຫວັງຂອງພວກເຮົາ ໃນການຍົກສູງຄວາມສຳຄັນຂອງເຄືອຂ່າຍ. ພວກເຮົາຍັງຊີ້ໃຫ້ເຫັນເຖິງ ຫລັກການທີ່ສຳຄັນ ຊຶ່ງເປັນທິດຊີ້ນຳໃຫ້ແກ່ການສຶກສາ ຄົ້ນຄວ້າ ແລະ ການດຳເນີນວຽກງານຂອງພວກເຮົາ.

### ວິໄສທັດ

ວິໄສທັດຂອງພວກເຮົາ ແມ່ນເຮັດໃຫ້ຂົງເຂດແມ່ນ້ຳຂອງ ມີການປົກຄອງບໍລິຫານນ້ຳ ທີ່ມີປະຊາທິປະໄຕ ຊຶ່ງສາມາດ ຮັບຮອງໄດ້ໃນລະດັບສາກົນ.

### ໜ້າທີ່ວຽກງານ

ໜ້າທີ່ວຽກງານຂອງພວກເຮົາ ແມ່ນເພື່ອສະໜັບສະໜູນ ການດຳລົງຊີວິດແບບຍືນຍົງ, ສຸຂະພາບທີ່ສົມບູນຂອງຊຸມຊົນ ແລະ ລະບົບນິເວດ ຢູ່ໃນພາກພື້ນແມ່ນ້ຳຂອງ ໂດຍຜ່ານການສຶກສາຄົ້ນຄວ້າວຽກງານຕົວຈິງ, ອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືວຽກງານ ແລະ ສ້າງລະບົບເຄືອຂ່າຍດ້ານຄວາມຮູ້ ໃນລະດັບສາກົນ ຊຶ່ງຊຸກຍູ້ໃຫ້ມີການສ້າງສາຍພົວພັນຮ່ວມມື ແລະ ການປັບປຸງ ທາງດ້ານການເມືອງ ແລະ ການດຳເນີນວຽກງານຕົວຈິງ.

### ຂໍ້ມູນກ່ຽວກັບວຽກງານ

ພວກເຮົາມີຈຸດປະສົງໃນການສ້າງຕັ້ງ M-POWER ໃຫ້ເປັນເຄືອຂ່າຍທີ່ມີການຮັບຮູ້ ແລະ ໄດ້ຮັບຄວາມເຊື່ອຖືໃນລະດັບກວ້າງຂວາງ ໃນນາມເຄືອຂ່າຍຂອງນັກສຶກສາຄົ້ນຄວ້າ, ນັກອຳນວຍຄວາມສະດວກ ແລະ ຜູ້ດຳເນີນການຕົວຈິງ ໃນລະດັບຍຸດທະສາດ ຊຶ່ງມີຄວາມຕັດສິນໃຈ ເພື່ອປັບປຸງການປົກຄອງບໍລິຫານນ້ຳ ຢູ່ປະເທດກຳປູເຈຍ, ຈີນ, ສປປ ລາວ, ພະມ້າ, ໄທ ແລະ ຫວຽດນາມ ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບພາກພື້ນ.

### ຫລັກການທີ່ເປັນທິດຊີ້ນຳ

ພວກເຮົາມີຄວາມຕັດສິນໃຈ ເພື່ອ:

- ສະໜັບສະໜູນ ການຮ່ວມມື ຂອງຫຼາຍພາກສ່ວນ ທີ່ກ່ຽວຂ້ອງ ກັບ ບັນຫາທີ່ສຳຄັນ ຊຶ່ງພົວພັນກັບນ້ຳ - ສິ່ງແວດລ້ອມ-ພະລັງງານ ແລະ ຄວາມສາມາດໃນການຟື້ນຕົວ ຢູ່ໃນຂົງເຂດແມ່ນ້ຳຂອງ ແລະ ຂອບເຂດທີ່ກວ້າງຂວາງກວ່ານັ້ນ, ລວມທັງ ບັນຫາທີ່ຢູ່ພາຍໃຕ້ຂອບເຂດ "ການປຶກສາຫາລືຮ່ວມກັນເພື່ອອານາຄົດຂອງນ້ຳ";

- ການສ້າງອິດທິພົນ ທາງດ້ານນະໂຍບາຍ ແລະ ການຍົກລະດັບຄວາມສາມາດ ໂດຍຜ່ານ ບົດຮຽນ ແລະ ປະສົບການ ໃນການສຶກສາຄົ້ນຄວ້າ ແບບມີສ່ວນຮ່ວມຂອງພວກເຮົາ, ໂດຍມີການອຳນວຍຄວາມສະດວກ ໃນການປຶກສາຫາລື ແລະ ໂດຍຜ່ານການສ້າງເຄືອຂ່າຍທາງດ້ານຄວາມຮູ້ ໃນລະດັບສາກົນ;

- ໃຫ້ຄວາມເອົາໃຈໃສ່ເປັນພິເສດ ຕໍ່ບັນຫາທີ່ມີສ່ວນພົວພັນກັບນະໂຍບາຍ ແລະ ການປະສານງານ ລະຫວ່າງ ວິທະຍາສາດ ແລະ ນະໂຍບາຍ ໃນການອອກແບບ ແລະ ການດຳເນີນການສຶກສາຄົ້ນຄວ້າດັ່ງກ່າວ;

- ເພີ່ມທະວີຄວາມຍຸຕິທຳທາງສັງຄົມ, ບັນຈຸເອົາຄວາມຮັບຜິດຊອບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ ຄວາມຍືນຍົງຂອງລະບົບນິເວດເຂົ້າໃນວຽກງານ ຢ່າງມີສັນຕິພາບ ແລະ ມີຄວາມເປັນລະບຽບ ຮຽບຮ້ອຍ, ເນັ້ນໜັກໃສ່ຄວາມເປັນທຳ ແລະ ການປົກຄອງບໍລິຫານ ທີ່ມີປະສິດທິພາບ ຢູ່ໃນການສຶກສາຄົ້ນຄວ້າ ວຽກງານຕົວຈິງຂອງພວກເຮົາ, ການອຳນວຍຄວາມສະດວກ ແລະ ການແລກປ່ຽນຄວາມຮູ້- ໂດຍມີການພິຈາລະນາ ຄວາມສ່ຽງແບບສະໝັກໃຈ ແລະ ບໍ່ສະໝັກໃຈ, ສິ່ງຕອບແທນທີ່ເປັນໄປໄດ້ ພ້ອມທັງສິດ ແລະ ພັນທະ ຂອງອົງການ ແລະ ພາກສ່ວນຕ່າງໆ ທັງໝົດທີ່ກ່ຽວຂ້ອງ; ແລະ

- ຮັບປະກັນໃຫ້ການພິຈາລະນາ, ການເຈລະຈາ ແລະ ການຕັດສິນບັນຫາ ກ່ຽວກັບນ້ຳ ມີຄວາມຮອບຄອບ, ໄດ້ຮັບຂໍ້ມູນລ່ວງໜ້າ ແລະ ດຳເນີນໄປຢ່າງມີຄວາມ ໂປ່ງໃສ.

# 3. ຈຸດປະສົງ ແລະ ເປົ້າໝາຍ

ເອກະສານໃນໝວດນີ້ ໄດ້ສະເໜີຈຸດປະສົງ ແລະ ເປົ້າໝາຍສະເພາະຂອງ M-POWER ລວມທັງການອະທິບາຍຄຳສັບທີ່ສຳຄັນ

## ຈຸດປະສົງ

ຈຸດປະສົງຂອງພວກເຮົາ ແມ່ນເພື່ອຄວາມປອດໄພ ໃນການດຳລົງຊີວິດການເປັນຢູ່ ແລະ ສຸຂະພາບຂອງຊຸມຊົນ ແລະ ລະບົບນິເວດ ຢູ່ໃນພາກພື້ນແມ່ນ້ຳຂອງ ໂດຍຜ່ານການປັບປຸງປະຊາທິປະໄຕແບບຕໍ່ເນື່ອງ ໃນການປົກຄອງບໍລິຫານນ້ຳ.

ພວກເຮົາເນັ້ນໜັກໃສ່ ເປົ້າໝາຍລວມ ຂອງການສ້າງປະຊາທິປະໄຕ. ມັນຖືກຕີຄວາມໝາຍ ໃນທີ່ນີ້ ໂດຍເນັ້ນໜັກໃສ່ບັນຫາຂອງການມີສ່ວນຮ່ວມ ແລະ ການປຶກສາຫາລືແບບຮອບດ້ານ ກັບປະຊາຊົນ, ການແບ່ງສິດອຳນາດ ແລະ ຄວາມຮັບຜິດຊອບ ຂອງອົງການຈັດຕັ້ງຂອງລັດ, ຄວາມຍຸຕິທຳທາງດ້ານສັງຄົມ ແລະ ຂອງເພດ, ການປົກປ້ອງສິດ; ການເປັນຕົວແທນ, ການກະຈາຍອຳນາດ ໃຫ້ແກ່ທ້ອງຖິ່ນ ແລະ ການໂຄສະນາເຜີຍແຜ່ຂໍ້ມູນ. ພວກເຮົາເຊື່ອວ່າ ການສຶກສາຄົ້ນຄວ້າ ທີ່ອີງໃສ່ວຽກງານຕົວຈິງ, ການຊຸກຍູ້ການປຶກສາຫາລື ແລະ ເຄືອຂ່າຍທາງດ້ານຄວາມຮູ້ ທີ່ເຂັ້ມແຂງ ສາມາດຊ່ວຍໃຫ້ສັງຄົມຄົ້ນຄວ້າຊອກຫາ ແລະ ຮັບຮອງເອົາການປົກຄອງບໍລິຫານນ້ຳ ທີ່ມີການປັບປຸງ ແທນທີ່ຈະເປັນການສັນນິຖານວ່າຮູບແບບໃນການດຳເນີນວຽກງານອັນດຽວແມ່ນເໝາະສົມຕໍ່ທຸກສະພາບສັງຄົມ ແລະ ຊັບພະຊາກອນ.

ພວກເຮົາໃຫ້ຄຳນິຍາມ *ການປົກຄອງບໍລິຫານນ້ຳ* ແມ່ນກວມເອົາວິທີທາງທີ່ສິດອຳນາດ ຖືກຈັດຕັ້ງຂຶ້ນ, ແລກປ່ຽນ ແລະ ເຈລະຈາ ຢູ່ໃນສັງຄົມ; ມີການພົວພັນຊຶ່ງກັນ ແລະ ກັນ ແລະ ມີຂະບວນການຕັດສິນບັນຫາ ຊຶ່ງເຮັດໃຫ້ຊັບພະຍາກອນແຫລ່ງນ້ຳມີການພັດທະນາ ແລະ ນຳໃຊ້ ແລະ ມີການແບ່ງປັນຜົນປະໂຫຍດ ແລະ ມີຄວາມສ່ຽງແບບບໍ່ສະໝັກໃຈ ຈາກການດຳເນີນວຽກງານດັ່ງກ່າວນີ້. ຄຳສັບດັ່ງກ່າວນີ້ ໄດ້ມີການພິຈາລະນາ ທຸກສິ່ງທີ່ມີອິດທິພົນເພື່ອປັບປຸງແຜນການ ແລະ ຄົ້ນຄວ້າ ຫາທາງເລືອກ, ການອອກແບບສະຖາບັນ ແລະ ການຈັດຕັ້ງໂດຍຜ່ານ ການດຳເນີນວຽກງານຕົວຈິງ ໃນແຕ່ລະອັນຂອງການບໍລິຫານນ້ຳ.

ການປົກຄອງບໍລິຫານ ແມ່ນເກີດຂຶ້ນຈາກການພົວພັນລະຫວ່າງ ລັດ, ທຸລະກິດ ແລະ ການຈັດຕັ້ງທີ່ບໍ່ຫາຜົນກຳໄລ ຢູ່ໃນລະດັບທີ່ແຕກຕ່າງກັນ. ມັນບໍ່ເປັນແຕ່ວຽກງານຂອງລັດເທົ່ານັ້ນ ແລະ ບໍ່ໄດ້ກຳນົດສະເພາະເຈາະຈົງ ຕໍ່ຂະໜາດ ຫຼື ຂົງເຂດສະເພາະໃດໜຶ່ງ.

## ເປົ້າໝາຍສະເພາະ

ເປົ້າໝາຍສະເພາະຂອງພວກເຮົາ ໄດ້ກວມເອົາ 5 ວຽກງານຕົ້ນຕໍ ທີ່ມີສ່ວນພົວພັນກັນດັ່ງຕໍ່ໄປນີ້:

**ການປຶກສາຫາລື:** ແມ່ນເພື່ອສ້າງຕັ້ງ ແລະ ກຳນົດຂະບວນການ ແບບມວນຊົນ ທີ່ສາມາດພິຈາລະນາສິດ, ຄວາມສ່ຽງ ແລະ ຄວາມຮັບຜິດຊອບຂອງກຸ່ມຄົນທີ່ແຕກຕ່າງກັນ ໃນບັນຫາດ້ານຕ່າງໆ ໂດຍຖືວ່າເປັນການດຳເນີນວຽກງານທົ່ວໄປ ເພື່ອຄົ້ນຄວ້າຊອກຫາ ແລະ ຕັດສິນບັນຫາ ກ່ຽວກັບ ການພັດທະນານ້ຳທີ່ສຳຄັນໃນລະດັບຊາດ ຫຼື ໃນລະດັບສາກົນ ແລະ ທາງເລືອກໃນການປົກຄອງບໍລິຫານ;

**ສະຖາບັນ:** ເພື່ອໃຫ້ເຂົ້າໃຈດີຂຶ້ນ, ມີອິດທິພົນ ແລະ ເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ ລະບົບການຈັດຕັ້ງ ຂອງສະຖາບັນ[1] ເພື່ອສະໜັບສະໜູນ ໃຫ້ມີຜົນໄດ້ຮັບ ຈາກວຽກງານທີ່ພົວພັນກັບຊັບພະຍາກອນນ້ຳ ທີ່ມີລັກສະນະໝັ້ນຄົງ ແລະ ເປັນທຳຫຼາຍຂຶ້ນ;

**ຄວາມຮູ້ ແລະ ຄວາມສາມາດ:** ເພື່ອໃຫ້ມີການພົວພັນຢ່າງໃກ້ສິດ ກັບລະບົບຄວາມຮູ້ ແບບທາງການ ແລະ ບໍ່ເປັນທາງການ ແລະ ມີການພົວພັນກັບຂະບວນການດ້ານນະໂຍບາຍ ແລະ ຕິດແໜ້ນກັບຊຸມຊົນ ທີ່ມີຄວາມຫລາກຫລາຍ, ມີການປ່ຽນແປງການດຳລົງຊີວິດຢູ່ໃນ ແລະ ຢູ່ນອກພາກພື້ນດັ່ງກ່າວນີ້;

**ຄວາມຍຸຕິທຳທາງສັງຄົມ:** ເພື່ອແກ້ໄຂ ແລະ ຜັນປ່ຽນເພດ, ຊົນຊັ້ນ, ເຊື້ອຊາດ ແລະ ຄວາມບໍ່ສະເໝີພາບຕ່າງໆ ໂດຍຜ່ານການຍົກສູງຄວາມຕື່ນຕົວ ແລະ ນຳໃຊ້ຫລັກການເພື່ອຄວາມຍຸຕິທຳຂອງສັງຄົມ[2] ຢູ່ໃນການສຶກສາຄົ້ນຄວ້າວຽກງານ ແລະ ເຄືອຂ່າຍ; ແລະ

**ຄວາມປອດໄພຂອງມະນຸດ:** ເພື່ອພິຈາລະນາທຸກປັດໄຈຢ່າງຄົບຖ້ວນ ຂອງທຳມະຊາດ ແລະ ຂອງມະນຸດ ຊຶ່ງສ້າງຜົນກະທົບຕໍ່ວົງຈອນຊີວິດຂອງ ອ່າງໂຕ່ງນ້ຳ ໃນເວລາຊອກຫາການແກ້ໄຂບັນຫາກ່ຽວກັບຊັບພະຍາກອນແຫລ່ງນ້ຳ.

1 ການຈັດຕັ້ງສະຖາບັນ ໝາຍເຖິງ ອົງການຈັດຕັ້ງ, ກົດໝາຍ, ລະບຽບການ, ນະໂຍບາຍ, ຍຸດທະສາດ, ການດຳເນີນວຽກງານຕົວຈິງ, ຫລັກການ ແລະ ອື່ນໆ.

2 ຫລັກການເພື່ອຄວາມຍຸຕິທຳຂອງສັງຄົມ ໝາຍເຖິງ ຄວາມຮັບຮູ້ກ່ຽວກັບຄວາມເປັນທຳ ແລະ ຄວາມສະເໝີພາບ ໃນການປະຕິບັດ ແລະ ການໃຫ້ໂອກາດ.

## 4. ແຜນງານກ່ຽວກັບການສຶກສາຄົ້ນຄວ້າ

ໝວດນີ້ ຂອງເອກະສານມີ 3 ອົງປະກອບ. ກ່ອນອື່ນໝົດພວກເຮົາໄດ້ມີການອະທິບາຍເຖິງ ລະບົບຍຸດທະສາດ ແລະ ການດຳເນີນວຽກງານ ຂອງພວກເຮົາ. ຈາກນັ້ນ ພວກເຮົາຊີ້ໃຫ້ເຫັນຫົວຂໍ້ທີ່ສຳຄັນ. ສຸດທ້າຍ ພວກເຮົາຊີ້ໃຫ້ເຫັນບັນດາໂຄງການ ແລະ ກໍລະນີສຶກສາທີ່ສຳຄັນ ຂອງການສຶກສາຄົ້ນຄວ້າຂອງພວກເຮົາ

### ລະບົບດຳເນີນວຽກງານ

ພວກເຮົາມີການຈັດຕັ້ງແຜນງານສຶກສາຄົ້ນຄວ້າຕົວຈິງ ຂອງພວກເຮົາຢູ່ໃນ 5 ຫົວຂໍ້ ຊຶ່ງພວກເຮົາຈະມີການຄົ້ນຄວ້າຢ່າງເລິກ ໂດຍຜ່ານ ການຈັດຕັ້ງປະຕິບັດ ໂຄງການຂອງພວກເຮົາເອງ ແລະ ມີການສົມທຽບ ແລະ ດຳເນີນການສຶກສາຕົວຈິງຢູ່ໃນລະດັບພາກພື້ນ ພ້ອມທັງຖອດຖອນ ບົດຮຽນຈາກອົງການໃດໜຶ່ງ ທີ່ມີຜົນຂອງການສຶກສາຄົ້ນຄວ້າມາກ່ອນ.

ການສຶກສາວຽກງານຕົວຈິງ, ພວກເຮົາໝາຍຄວາມວ່າ ການດຳເນີນວຽກງານຂອງພວກເຮົາສ່ວນຫຼາຍແມ່ນມີການເຂົ້າຮ່ວມຢູ່ໃນການປຶກສາຫາລືດ້ານນະໂຍບາຍ ແລະ ການດຳເນີນວຽກງານທີ່ພວກເຮົານຳມາຄົ້ນຄວ້າວິໄຈ ແລະ ໃຫ້ຄວາມເຫັນ. ພວກເຮົາຍັງມີການປັບປຸງຕົວເອງ ໃນວິທີການສຶກສາຄົ້ນຄວ້າຕົວຈິງ ເພາະການສຶກສາຄົ້ນຄວ້າດັ່ງກ່າວນີ້ ແມ່ນດຳເນີນໄປໃນສະພາບທີ່ມີການປ່ຽນແປງ ແລະ ສາມາດປັບປຸງໄດ້. ບົດຮຽນ ທີ່ພວກເຮົາຖອດຖອນໄດ້ ໂດຍຜ່ານການແລກປ່ຽນບົດຮຽນ ແລະ ການຄົ້ນຄວ້າວິໄຈ, ຈະໃຫ້ຂໍ້ມູນໃນການຄົ້ນຄິດ ແລະ ການດຳເນີນວຽກງານ ຂອງເຄືອຂ່າຍຂອງພວກເຮົາ ພ້ອມທັງພາກສ່ວນທີ່ພວກເຮົາໄດ້ນຳມາເຂົ້າຮ່ວມ ໃນການດຳເນີນວຽກງານກັບພວກເຮົາ.

ສີ່ຫົວຂໍ້ທຳອິດ (ການປຶກສາຫາລື, ການຈັດຕັ້ງ, ຄວາມຮູ້ ແລະ ຄວາມສາມາດ, ຄວາມຍຸຕິທຳໃນສັງຄົມ) ໄດ້ຊີ້ໃຫ້ເຫັນເຖິງ ຂໍ້ມູນຫຍໍ້ໃນການດຳເນີນວຽກງານ ກ່ຽວກັບການສຶກສາຄົ້ນຄວ້າຕົວຈິງຂອງພວກເຮົາ, ຊຶ່ງຫົວຂໍ້ທີ່ 5 (ຄວາມປອດໄພຂອງມະນຸດ) ແມ່ນຈະຖືກຖອດຖອນບົດຮຽນ ຈາກ ການສຶກສາຄົ້ນຄວ້າຮ່ວມກັນຂອງພວກເຮົາ.

### ຫົວຂໍ້

ຫົວຂໍ້ ໃນການດຳເນີນວຽກງານຂອງພວກເຮົາ ແມ່ນຕິດພັນກັບ ເປົ້າໝາຍສະເພາະຂອງພວກເຮົາ, ເປັນຕົ້ນແມ່ນ : ການປຶກສາຫາລື, ການຈັດຕັ້ງ, ຄວາມຮູ້ ແລະ ຄວາມສາມາດ, ຄວາມຍຸຕິທຳໃນສັງຄົມ ແລະ ຄວາມປອດໄພຂອງມະນຸດ ພວກເຮົາໄດ້ອະທິບາຍຄຳສັບ ແລະ ຊີ້ໃຫ້ເຫັນ ເຫດຜົນທີ່ສຳຄັນຂອງແຕ່ລະຫົວຂໍ້. ພວກເຮົາເຫັນວ່າ ຫົວຂໍ້ທີ່ສະເໜີໃນນີ້ ແມ່ນໄດ້ມີການອະທິບາຍຢ່າງພຽງພໍເພື່ອດຶງດູດຄວາມສົນໃຈຂອງບຸກຄົນ ໂດຍບໍ່ໃຫ້ມີການຕີຄວາມໝາຍວ່າ ພວກເຂົາເຈົ້າຖືກຕັດແຍກອອກຈາກວຽກງານດັ່ງກ່າວນີ້.

#### ການປຶກສາຫາລື

**ການອະທິບາຍ :** ຫົວຂໍ້ດັ່ງກ່າວນີ້ ໄດ້ຊີ້ໃຫ້ເຫັນວິທີການ ທີ່ເປັນໄປໄດ້ຂອງທາງເລືອກຕ່າງໆ ເພື່ອໃຫ້ມີການປຶກສາຫາລືແບບຮອບດ້ານ ກ່ຽວກັບບັນຫາທີ່ພົວພັນກັບນໍ້າ, ວຽກງານດ້ານການທູດ, ການເຈລະຈາ ແລະ ການຕັດສິນບັນຫາຢູ່ໃນ ອົງເຂດແມ່ນໍ້າຂອງ. ຫົວຂໍ້ໃນການປຶກສາຫາລື ສ່ອງແສງໃຫ້ເຫັນວ່າ ການປະກາດນະໂຍບາຍຂອງຫຼາຍພາກສ່ວນ ຈະສາມາດນຳເອົານະໂຍບາຍກ່ຽວກັບນໍ້າ ແລະ ການຕັດສິນບັນຫາເຂົ້າໄປພິຈາລະນາ ໃນລະດັບລັດໄດ້ ຫລືບໍ່ ແລະ ດ້ວຍວິທີໃດ. ເພື່ອໃຫ້ສຳເລັດວຽກງານດັ່ງກ່າວ, ສະມາຊິກຂອງເຄືອຂ່າຍ ຕ້ອງສືບຕໍ່ຈັດຕັ້ງ ແລະ ເຂົ້າຮ່ວມການປຶກສາຫາລື ບັນຫາກ່ຽວກັບນໍ້າຢ່າງເປັນເຈົ້າການ ດ້ວຍການຈັດ: ກອງປະຊຸມ, ປະຊຸມສຳມະນາ, ການຊຸມນຸມ, ການເອົາຄຳຄິດຄຳເຫັນຈາກປະຊາຊົນ ແລະ ການປະຊຸມ ແລະ ການເຈລະຈາ ບັນຫາທາງດ້ານນະໂຍບາຍ ໂດຍຜ່ານຮູບການແບບທາງການ ແລະ ບໍ່ເປັນທາງການ ເຊິ່ງມີສ່ວນພົວພັນກັບ ບັນຫາດ້ານນະໂຍບາຍ ແລະ ການຄຸ້ມຄອງຊັບພະຍາກອນແຫລ່ງນໍ້າ. ສະມາຊິກເຄືອຂ່າຍ ຍັງຕ້ອງໄດ້ທົບທວນ ແລະ ພັດທະນາ ວິທີການ ທີ່ມີປະສິດທິພາບ ເຂົ້າໃນການດຳເນີນການປຶກສາຫາລື.

**ເຫດຜົນ:** ຈຸດຍືນທີ່ມີປະສິດທິພາບ ແມ່ນມີການກຳນົດຄຸນລັກສະນະ ໂດຍມີການໃຫ້ໂອກາດ ໃນການ ປຶກສາຫາລື ບັນຫາຢ່າງຮອບດ້ານແບບເປີດເຜີຍ ແລະເປັນທຳ ຊຶ່ງສາມາດນຳໄປເຖິງການຕັດສິນບັນຫາ, ການຕົກລົງ ແລະ ການຈັດຕັ້ງປະຕິບັດວຽກງານ ທີ່ດີກວ່າ. ຫົວຂໍ້ຂອງພວກເຮົາ ຮັບປະກັນໃຫ້ມີຈຸດຍືນ ຂອງພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ແບບມີປະສິດທິພາບ, ບໍ່ສະເພາະແຕ່ໃນການເຮັດໃຫ້ຕົວແທນຂອງຫຼາຍພາກສ່ວນ ສາມາດຊອກຫາການແກ້ໄຂບັນຫາຮ່ວມກັນທີ່ດີຂຶ້ນເທົ່ານັ້ນ ແຕ່ຍັງໃຫ້ໂອກາດ ໃນການເຈລະຈາຕໍ່ລອງ ແລະ ຊອກຫາການຜ່ອນຜັນ ຊຶ່ງກັນ ແລະ ກັນ. ສິ່ງດັ່ງກ່າວນີ້ໄດ້ຮັບຮູ້ວ່າການຕົກລົງເຫັນດີເປັນເອກະພາບກັນນັ້ນ ແມ່ນມີຄວາມເປັນໄປໄດ້ນ້ອຍທີ່ສຸດ ຍ້ອນວ່າ ມີຜົນປະໂຫຍດ ແລະ ຈຸດຍືນທາງດ້ານຍຸດທະສາດ ທີ່ແຕກຕ່າງກັນຂອງພາກສ່ວນທີ່ກ່ຽວຂ້ອງ. ເຖິງວ່ານະໂຍບາຍຂອງພາກສ່ວນທີ່ກ່ຽວຂ້ອງຈະສາມາດສະໜັບສະໜູນ ການຈັດຕັ້ງປະຕິບັດວຽກງານໃນຮູບແບບອື່ນ ຂອງການປຶກຄອງບໍລິຫານ, ແຕ່ມັນບໍ່ສາມາດຊອກຫາສິ່ງອື່ນມາປ່ຽນແທນວຽກງານດັ່ງກ່າວນີ້ໄດ້.



**Visualization of issues explored during M-POWER/ CPWF hosted session on Water Governance; MRC Watershed Management conference, Chiang Mai, Thailand, March 2011**
Photo: M-POWER/CPWF

## ສະຖາບັນ

**ການອະທິບາຍ :** ຫົວຂໍ້ດັ່ງກ່າວນີ້ແມ່ນສຸມໃສ່ຄວາມເຂົ້າໃຈ ຕໍ່ຂະບວນການທາງດ້ານ ການເມືອງ, ເສດຖະກິດ ແລະ ລະບົບນິເວດ ທີ່ມີໃນປະຈຸບັນ ຢູ່ໃນອົງເຂດພາກພື້ນແມ່ນ້ຳຂອງ ແລະ ນອກອົງເຂດດັ່ງກ່າວ, ໂດຍສະເພາະແມ່ນສິ່ງຈູງໃຈ, ສາຍພົວພັນ ການແແບ່ງ ແລະ ການແຍ່ງສິດອຳນາດ ລະຫວ່າງກຸ່ມຄົນ ແລະ ບຸກຄົນທີ່ແຕກຕ່າງກັນ ຊຶ່ງຮວມກັນເຂົ້າແລ້ວ ແມ່ນມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ຜົນໄດ້ຮັບຂອງການພັດທະນາ. ການສຶກສາຄົ້ນຄວ້າຂອງພວກເຮົາ ໄດ້ມີການຄາດຄະເນລ່ວງໜ້າ ເພື່ອສະໜັບສະໜູນ ຍຸດທະສາດ ທີ່ມີຄວາມເປັນໄປໄດ້ ທາງດ້ານການເມືອງ ແລະ ມີປະສິດທິພາບຫຼາຍຂື້ນ, ພ້ອມທັງຄວາມຄາດຫວັງ ທີ່ສາມາດເປັນໄປໄດ້ຫຼາຍຂື້ນວ່າ ສິ່ງໃດທີ່ຈະສາມາດບັນລຸຜົນສຳເລັດໄດ້, ມີໄລຍະເວລາຈັດຕັ້ງປະຕິບັດ ນານປານໃດ ແລະ ມີຄວາມສ່ຽງອັນໃດແດ່? ອິດທິພົນ ຕົວຈິງຂອງວຽກງານດັ່ງກ່າວນີ້ ແມ່ນຈະຂື້ນກັບຂອບເຂດ ໃນການໃຫ້ຄຳຄິດຄຳເຫັນກ່ຽວກັບການປ່ຽນແປງ ການດຳເນີນວຽກງານ ເພື່ອການພັດທະນາ ແລະ ນະໂຍບາຍຂອງສະຖາບັນ ທີ່ໄດ້ຖືກຮັບຮອງເອົາ. M-POWER ສຸມໃສ່ການຄົ້ນຄວ້າຊອກຫາ ແລະ ພັດທະນາຄົນ ແລະ ການຈັດຕັ້ງກຸ່ມໃໝ່ ຊຶ່ງມີເຄື່ອງມືດຳເນີນວຽກງານ ຢູ່ໃນລະດັບຂະແໜງການ ແລະ ລະດັບແຜນງານ ຊຶ່ງສາມາດສະໜອງຄວາມເປັນໄປໄດ້ທີ່ດີ ໃນການແກ້ໄຂຊ່ອງຫວ່າງ ລະຫວ່າງການຄົ້ນຄວ້າວິໄຈ ແລະ ການດຳເນີນວຽກງານ ເພື່ອຮັບປະກັນໃຫ້ມີການປ່ຽນແປງ ທີ່ມີຄວາມໝາຍ ຢູ່ໃນການດຳເນີນວຽກງານ ຂອງລັດຖະບານ, ຜູ້ໃຫ້ທຶນ ແລະ ຜູ້ພັດທະນາ.

**ເຫດຜົນ:** ການເຂົ້າແຊກຄຸມການພັດທະນາ ແບບມີປະສິດທິພາບ ຮຽກຮ້ອງໃຫ້ມີຄວາມເຂົ້າໃຈທີ່ດີ ຕໍ່ ບັນຫາທາງດ້ານການເມືອງ ຕໍ່ລະບົບນິເວດ ຢູ່ໃນພາກພື້ນແມ່ນ້ຳຂອງ. ບັນຫານີ້ ມີຄວາມສຳຄັນຍ້ອນວ່າ ຜົນສຳເລັດ ຂອງການພັດທະນາ ເພື່ອຜົນປະໂຫຍດ ຂອງຜູ້ທຸກຈົນ, ຄວາມຍຸຕິທຳທາງດ້ານສັງຄົມ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນມີການຕິດພັນຢ່າງສະໜິດແໜ້ນ ກັບການເມືອງທີ່ດີ. ສູນກາງຂອງລະບົບນິເວດທາງດ້ານການເມືອງແມ່ນສິດອຳນາດ ແລະ ວິທີທາງ ຊຶ່ງມັນໄດ້ຖືກສ້າງຂື້ນ ແລະ ນຳໃຊ້ ແລະ ມັນຈະສະແດງອອກໂດຍຜ່ານ ລະບົບນິເວດ ຂອງມັນຄືຈັ່ງໃດ? ການວິໄຈລະບົບນິເວດທາງດ້ານການເມືອງ ທີ່ໄດ້ຖືກດຳເນີນພາຍໃຕ້ຫົວຂໍ້ດັ່ງກ່າວ ຈະສະໜັບສະໜູນ ການຕີລາຄາ ການປົກຄອງທົ່ວໄປ ໂດຍສາມາດໃຫ້ຂໍ້ມູນທີ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບສິດອຳນາດ, ຄວາມສາມາດ, ຄວາມຮັບຜິດຊອບ ແລະ ໜ້າທີ່ຮັບຜິດຊອບ ພ້ອມທັງລະດັບຂອງຄວາມສາມາດໃນການຟື້ນຕົວ, ພວກເຮົາຍັງຈະເອົາໃຈໃສ່ຕໍ່ພາລະບົດບາດ ຂອງອົງການຈັດຕັ້ງ ທີ່ເປັນທາງການ ແລະ ການເຄື່ອນໄຫວວຽກງານທາງດ້ານວັດທະນາທຳສັງຄົມ. ເຄື່ອງມືສຳລັບການດຳເນີນວຽກງານທີ່ດີເລີດໃນລະດັບສາກົນ ຈະຖືກນຳມາຄົ້ນຄວ້າ ເພື່ອຖອດຖອນບົດຮຽນ ສຳລັບແຕ່ລະພາກສ່ວນ ແລະ ຄວາມສາມາດໃນການນຳໃຊ້ ສຳລັບການຕັດສິນບັນຫາ ຢູ່ໃນພາກພື້ນແມ່ນ້ຳຂອງ.

## ຄວາມຮູ້ ແລະ ຄວາມສາມາດ

**ການອະທິບາຍ:** ຫົວຂໍ້ດັ່ງກ່າວນີ້ເວົ້າເຖິງວ່າ ຫຼາຍຮູບແບບຂອງຄວາມຮູ້ທີ່ແຕກຕ່າງກັນ ສາມາດ ໃຫ້ຂໍ້ມູນກ່ຽວກັບການຕັດສິນບັນຫາ ແລະ ດຳເນີນວຽກງານຄືແນວໃດ. ຫົວຂໍ້ນີ້ມີເປົ້າໝາຍ ເພື່ອໃຫ້ກອມເອົາ ແລະ ລວມເອົາຄວາມເຂົ້າໃຈຈາກຂະບວນການຕີລາຄາປະເມີນຜົນແບບທາງການ ຊຶ່ງຖືກກຳນົດໂດຍລັດຖະບານ ແລະ ອົງການລະຫວ່າງລັດຖະບານ, ໂດຍຜ່ານປະເພດຄວາມຮູ້ທີ່ມີຄວາມຫຼາກຫຼາຍຢູ່ໃນລະດັບທ້ອງຖິ່ນ ແລະ ລະດັບການຈັດຕັ້ງຊຶ່ງຖືກນຳໃຊ້ຢູ່ໃນພາກປະຕິບັດຕົວຈິງ. ການເຂົ້າເຖິງ ແລະ ຄວາມສາມາດໃນການວິໄຈ ແມ່ນມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ ຢູ່ໃນສັງຄົມໃນເຂດແມ່ນ້ຳຂອງ. ບັນຫາດັ່ງກ່າວນີ້ ເຮັດໃຫ້ມີການກຳນົດ ຄວາມຮັບຜິດຊອບທາງສັງຄົມສູງ ຕໍ່ຜູ້ຊ່ຽວຊານດ້ານວິຊາການ ແລະ ຜູ້ບໍລິຫານ ທີ່ດຳເນີນວຽກງານຢູ່ໃນລະບົບການປົກຄອງດັ່ງກ່າວນີ້ ຊຶ່ງມີຜົນປະໂຫຍດທາງດ້ານການຈັດຕັ້ງສູງ ສຳລັບບາງປະເພດຂອງເຫດຜົນ ຫຼື ຂໍ້ມູນທີ່ພົບເຫັນ. ຄວາມພະຍາຍາມດັ່ງກ່າວ ຈະໄດ້ສ້າງຂື້ນເພື່ອໃຫ້ກອມເອົາຄວາມຮູ້ຢູ່ໃນລະດັບພື້ນຖານ ໃນຂະບວນການຕັດສິນບັນຫາ. ການພົວພັນກັນລະຫວ່າງວິທະຍາສາດ ແລະ ນະໂຍບາຍ ຈຳເປັນຕ້ອງໄດ້ຖືກນຳມາເຈລະຈາ ແລະ ມີການຮັບຮູ້ ເຖິງການອາໄສເຊິ່ງກັນ ແລະ ກັນ ຂອງສອງຂະແໜງການນີ້.

ແຜນງານຄົ້ນຄວ້າຂອງພວກເຮົາ ເກີດຂື້ນພາຍໃຕ້ຫົວຂໍ້ດັ່ງກ່າວນີ້ ແລະ ໄດ້ຍົກລະດັບຄວາມເຂັ້ມແຂງຂອງຕົນ ໂດຍຜ່ານຂະບວນການທົບທວນບັນຫາ. ແຜນງານດັ່ງກ່າວນີ້ແມ່ນຈະຮັກສາຈຸດສຸມທີ່ສຳຄັນ ກ່ຽວກັບການຍົກສູງຄວາມສາມາດທາງດ້ານວິຊາການໃນການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳແບບຮອບດ້ານ ສຳລັບທາງຜູ້ສຶກສາຄົ້ນຄວ້າ ແລະ ພະນັກງານຂອງລັດຖະບານ (ກະລຸນາເບິ່ງໝວດຕໍ່ໄປ).

**ເຫດຜົນ :** M-POWER ຮັບຮູ້ວ່າ ການສ້າງຄວາມຮູ້ທີ່ສຳຄັນ ແລະ ຄວາມຈຳເປັນໃນການພັດທະນາຄວາມສາມາດ ຈຳເປັນຕ້ອງໄດ້ເກີດຂຶ້ນ. ການຮຽນຮູ້ທາງສັງຄົມ ກ່ຽວກັບການປົກຄອງບໍລິຫານນ້ຳ ຢູ່ໃນເຂດແມ່ນ້ຳຂອງ ເຫັນວ່າຍັງດຳເນີນໄປຢ່ອນຂ້າງຊັກຊ້າ ແລະ ອ່ອນນ້ອຍກ່ອນ ລະດັບທີ່ເຫັນວ່າມີຄວາມຈຳເປັນ ເພື່ອຮັບປະກັນການດຳເນີນຊີວິດແບບຍືນຍົງ ສຳລັບກຸ່ມຄົນທີ່ມີຄວາມບອບບາງໃນສັງຄົມ ແລະ ເພື່ອແກ້ໄຂສິ່ງທ້າທາຍ ໃນການພັດທະນາທາງດ້ານສັງຄົມ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ຢູ່ໃນພາກພື້ນນີ້. ການຕີລາຄາປະເມີນຜົນສ່ວນນ້ອຍ ແມ່ນຖືກຍອມຮັບວ່າເປັນໜ້າເຊື່ອຖື ແລະ ຍັງມີນ້ອຍກວ່ານັ້ນ ຮັບຮູ້ວ່າມີຄວາມຖືກຕ້ອງ. ສ່ວນຫຼາຍ, ຂໍ້ເທັດຈິງ ແລະ ຄວາມບິດເບືອນແມ່ນມີຄວາມກ່ຽວຂ້ອງກັນ ໃນວິທີທາງຊຶ່ງເຮັດໃຫ້ມີການກີດກັນ ການເຈລະຈາ, ການປຶກສາຫາລື ແລະ ການຕັດສິນບັນຫາ ດ້ານນະໂຍບາຍທີ່ມີປະສິດທິພາບ.

## ຄວາມຍຸຕິທຳຂອງສັງຄົມ

**ການອະທິບາຍ :** ຫົວຂໍ້ດັ່ງກ່າວນີ້ ໄດ້ຄົ້ນຄວ້າວິໄຈສິ່ງທ້າທາຍ ຂອງຄວາມຍຸຕິທຳໃນສັງຄົມ ເພື່ອຫລຸດຜ່ອນຄວາມແຕກຕ່າງທາງດ້ານໂອກາດ, ສິດ, ຄວາມສ່ຽງທີ່ບໍ່ສະໝັກໃຈ ແລະ ການແບ່ງປັນຜົນປະໂຫຍດ ແລະ ການເຂົ້າເຖິງບັນຫາ ໂດຍຜ່ານການປ່ຽນແປງຮູບແບບຂອງ ການເຂົ້າຮ່ວມວຽກງານໃນການປົກຄອງບໍລິຫານນ້ຳ, ພວກເຮົາສຸມໃສ່ໃຫ້ຄວາມສົນໃຈ ຕໍ່ບັນຫາຄວາມເປັນທຳໃນສັງຄົມ ຊຶ່ງມີຄວາມແຕກຕ່າງກັນຕາມເຂດ, ຊົນຊາດ ແລະ ຊັ້ນຄົນ. ໃນການປະຕິບັດວຽກງານດັ່ງກ່າວນີ້ ພວກເຮົາເອົາບັນຫາກ່ຽວກັບອຳນາດເປັນໃຈກາງ ຂອງການສຶກສາຄົ້ນຄວ້າຂອງພວກເຮົາ. ພວກເຮົາຄິດທີ່ຈະຊອກຫາເງື່ອນໄຂ ແລະ ເນື້ອໃນ ຊຶ່ງກຸ່ມຄົນແຕກຕ່າງກັນ ເຂົ້າຮ່ວມໃນການປົກຄອງບໍລິຫານນ້ຳ ແລະ ຜົນສະທ້ອນຂອງວຽກງານສຳລັບ ຄວາມຢູ່ດີກິນດີຂອງເຂົາເຈົ້າ, ໂດຍສະເພາະ ສຸຂະພາບ ແລະ ການຮັບປະກັນທາງດ້ານສະບຽງອາຫານ. ພວກເຮົາຍັງມີການຖາມຄຳຖາມທີ່ຄ້າຍຄືກັນ ກ່ຽວກັບກຸ່ມຄົນ ທີ່ມີຄວາມບອບບາງທາງດ້ານສັງຄົມ ຢູ່ໃນພາກພື້ນນີ້, ໂດຍສະເພາະຊົນເຜົ່າສ່ວນນ້ອຍ, ອົບພະຍົບ, ກຸ່ມຄົນໃນເມືອງ ທີ່ອາໃສຢູ່ໃນເຂດແອອັດ ແລະ ຊາວນາທີ່ບໍ່ມີທີ່ດິນເປັນຂອງຕົນເອງ. ສຸດທ້າຍ ພວກເຮົາໄດ້ມີການເບິ່ງວ່າ ບັນຫາກ່ຽວກັບ ຊັ້ນຄົນ, ຊົນເຜົ່າ ແລະ ເພດ ມີການພົວພັນກັນຄືແນວໃດ ແລະ ມີການສ້າງສາຍພົວພັນຊຶ່ງຕ້ອງມີການເພິ່ງພາອາໃສກັນຄືແນວໃດ. ປຶ້ມເຫຼັ້ມທີ່ ສາມ ຂອງພວກເຮົາ ທີ່ໄດ້ມີການກວດກາແລ້ວ ກ່ຽວກັບສິດທິຕໍ່ນ້ຳ ແລະ ຄວາມຍຸຕິທຳທາງດ້ານສັງຄົມ ຢູ່ໃນພາກພື້ນແມ່ນ້ຳຂອງ ໄດ້ມີການສຶກສາຄົ້ນຄວ້າບັນຫາດັ່ງກ່າວນີ້.

**ເຫດຜົນ :** ຫົວຂໍ້ຂອງການສຶກສາຄົ້ນຄວ້າ ຂອງພວກເຮົາແມ່ນການເຂົ້າຮ່ວມກັບ ກຸ່ມຄົນຢູ່ໃນສັງຄົມ (ລວມທັງດ້ານເຫດຜົນ ແລະ ການປະຕິບັດວຽກງານຕົວຈິງ) ຊຶ່ງສ່ວນຫຼາຍແລ້ວ ແມ່ນເປັນເຄື່ອງມືທີ່ສຳຄັນ ຊຶ່ງນຳໄປເຖິງການຕໍ່ສູ້ເພື່ອການຕັດສິນບັນຫາສະເພາະໃດໜຶ່ງ ຫຼາຍກວ່າການພັດທະນາເພື່ອຜົນປະໂຫຍດ ຂອງກຸ່ມເປົ້າໝາຍໃດໜຶ່ງ. ຕົວຢ່າງ : ໃນກໍລະນີຂອງຜູ້ຍິງ, ຄຳສັບ "ການມີສ່ວນຮ່ວມ" ໄດ້ກວມເອົາການຕີຄວາມໝາຍຢ່າງກວ້າງຂວາງ : ນັບຈາກການນຳໃຊ້ແຮງງານ (ຊຶ່ງສ່ວນຫຼາຍບໍ່ໄດ້ຮັບຄ່າວ່າຈ້າງ), ການລະດົມເພື່ອຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຊຶ່ງສ່ວນຫຼາຍ ຈະຖືກຕີຄວາມໝາຍວ່າເປັນການຂະຫຍາຍພາລະບົດບາດຂອງເຂົາເຈົ້າຢູ່ໃນຄອບຄົວ ຫຼື ມີບົດບາດຢູ່ໃນການສະໜອງທຶນໃຫ້ແກ່ຊຸມຊົນ.

ສິ່ງທ້າທາຍທາງດ້ານຍຸຕິທຳຢູ່ໃນສັງຄົມ ບໍ່ເປັນພຽງຄຳຖາມ ຂອງຂະບວນການເທົ່ານັ້ນ, ແຕ່ຍັງເປັນຜົນໄດ້ຮັບອັນໜຶ່ງ ແລະ ເປັນກະທົບຕໍ່ການດຳລົງຊີວິດ ຂອງກຸ່ມຄົນທີ່ອ່ອນນ້ອຍ. ການສຶກສາຄົ້ນຄວ້າວຽກງານຕົວຈິງຈຳເປັນຕ້ອງໄດ້ຊີ້ໃຫ້ເຫັນຄວາມບໍ່ສະເໝີພາບກັນ ແລະ ການດຳເນີນວຽກງານ ເພື່ອປັບປຸງຜົນໄດ້ຮັບຂອງວຽກງານ ສຳລັບ ກຸ່ມຄົນ ທີ່ມີຄວາມອ່ອນແອ. ການປ່ຽນແປງການຈຳແນກ ແລະ ການກະທຳທີ່ບໍ່ເປັນທຳ ຊຶ່ງເກີດຂຶ້ນຢູ່ໃນສະພາບແວດລ້ອມ ທີ່ມີສິດທິ, ຜົນປະໂຫຍດ ແລະ ວຽກງານ ທີ່ບໍ່ເທົ່າທຽມກັນ ເປັນສິ່ງທີ່ຫຍຸ້ງຍາກ, ແຕ່ມັນກໍເປັນຈຸດປະສົງຕົ້ນຕໍຂອງ M-POWER.

## ຄວາມປອດໄພຂອງມະນຸດ

**ການອະທິບາຍ :** ຫົວຂໍ້ດັ່ງກ່າວນີ້ ໄດ້ສຶກສາຄົ້ນຄວ້າແຜນງານສຶກສາວຽກງານຕົວຈິງທັງໝົດ ຂອງພວກເຮົາ ໂດຍເບິ່ງທາງດ້ານຄວາມປອດໄພຂອງມະນຸດ. ວຽກງານດັ່ງກ່າວນີ້ ໄດ້ສະແດງໃຫ້ເຫັນຂໍ້ມູນແບບຮອບດ້ານ ແລະ ຜົນຂອງການສຶກສາຄົ້ນຄວ້າ ກ່ຽວກັບຄວາມປອດໄພຂອງມະນຸດ ຈາກຫ້າດ້ານຂອງວຽກງານທີ່ສຳຄັນ ຄື : ສິ່ງແວດລ້ອມ / ການບໍລິການຂອງລະບົບນິເວດ, ອາຫານ, ພະລັງງານ, ໄພພິບັດທາງທຳມະຊາດ ແລະ ການປັບຕົວຂອງການດຳລົງຊີວິດ. ພວກເຮົາ ໄດ້ນຳໃຊ້ຂະບວນການທີ່ມີການເຂົ້າຮ່ວມຂອງຫຼາຍພາກສ່ວນ ເພື່ອບັນລຸ ເປົ້າໝາຍຄວາມຍືນຍົງທາງດ້ານເສດຖະກິດ, ຜົນປະໂຫຍດທາງລະບົບນິເວດ ແລະ ສັງຄົມ. ຢູ່ພາກພື້ນນີ້ ພວກເຮົາມີການສ້າງຄວາມແຕກຕ່າງໃນວິທີທາງ ຊຶ່ງຜູ້ເຂົ້າຮ່ວມວຽກງານທີ່ແຕກຕ່າງກັນ ໄດ້ມີການກຳນົດບັນຫາກ່ຽວກັບສິ່ງແວດລ້ອມ ແລະ ການດຳລົງຊີວິດ ການເປັນຢູ່ ໃນອ່າງໂຕ່ງທີ່ເປັນເຂດພູສູງ ແລະ ເຂດທົ່ງພຽງ. ຜູ້ເຂົ້າຮ່ວມວຽກງານດັ່ງກ່າວນີ້ ແມ່ນກວມໄປເຖິງອົງການຈັດຕັ້ງຢູ່ໃນຂັ້ນພື້ນຖານ ຊຶ່ງເປັນຕົວແທນໃຫ້ແກ່ສິດຜົນປະໂຫຍດ ຂອງຊົນເຜົ່າສ່ວນນ້ອຍ ແລະ ຜູ້ຊ່ຽວຊານດ້ານການສຶກສາ ຈົນເຖິງຜູ້ປົກຄອງຢູ່ໃນອົງການຈັດຕັ້ງຂອງລັດ. ພວກເຮົາໄດ້ສະໜອງໂອກາດໃໝ່ ໃຫ້ແກ່ບັນດາບຸກຄົນ ຊຶ່ງຕາມປົກກະຕິແລ້ວ ແມ່ນຖືກຕັດແຍກ ອອກຈາກລະບົບປະຊຸມ ເພື່ອຕັດສິນບັນຫາດ້ານນະໂຍບາຍ ແລະ ເພື່ອໃຫ້ເຂົາເຈົ້າສາມາດເປັນຕົວແທນທີ່ດີຂຶ້ນ ໃຫ້ແກ່ກຸ່ມຄົນຂອງຕົນເອງ ແລະ ເພື່ອໃຫ້ສາມາດປຶກສາຫາລືກ່ຽວກັບບັນຫາ ທີ່ເກີດຂຶ້ນຢູ່ເຂດພູດອຍ ແລະ ເຂດທົ່ງພຽງ ແລະ ທາງເລືອກດ້ານຕ່າງໆ. ພວກເຮົາໄດ້ເອົາໃຈໃສ່ເປັນພິເສດຕໍ່ບົດບາດຂອງນ້ຳ ແລະ ການຄຸ້ມຄອງອ່າງໂຕ່ງ ຢູ່ໃນຫົວຂໍ້ດັ່ງກ່າວນີ້ ໂດຍສະເພາະແມ່ນບັນຫາທາງດ້ານນະໂຍບາຍ ແລະ ການເມືອງ. ຫລັງຈາກນັ້ນ ພວກເຮົາຄາດວ່າ ຈະໄດ້ມີການປະກອບສ່ວນຕໍ່ຂະບວນການປຶກສາຫາລືທີ່ກຳລັງດຳເນີນໄປ ແລະ ຂະບວນການໃໝ່ ທີ່ມີເປົ້າໝາຍເພື່ອຫລຸດຜ່ອນຂໍ້ຂັດແຍ່ງ.







**Environments, infrastructure and livelihoods vary widely across the Mekong Region**
Photos from top left: Bernard Moizo, Lisa Robins, Kim Geheb

**ເຫດຜົນ** : ບັນຫາກ່ຽວກັບຊັບພະຍາກອນນ້ຳ ແມ່ນເລີ່ມຈາກລະດັບອ່າງໂຕ່ງ; ເກີດຈາກ ການເກີດຂື້ນຂອງ ໄພນ້ຳຖ້ວມ ຊຶ່ງເກີດຈາກການໄຫລຂອງນ້ຳ ໃນລະດັບສູງ ຈົນເຖິງໄພແຫ້ງແລ້ງ ທີ່ເກີດຈາກຝົນຕົກນ້ອຍ. ຜົນສະທ້ອນ ຕໍ່ບັນຫາດັ່ງກ່າວນີ້ ແມ່ນການປ່ຽນແປງທີ່ມີຕໍ່ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ ໂດຍປະຊາຊົນ ຊຶ່ງຈະນຳມາເຖິງຄວາມເປັນໄປໄດ້ ຂອງສະພາບການທີ່ມີຂໍ້ຂັດແຍ່ງ. ດ້ວຍເຫດນັ້ນ ມັນຈຶ່ງມີຄວາມຈຳເປັນໃນການ ພິຈາລະນາ ປັດໄຈທາງດ້ານທຳມະຊາດ ແລະ ປັດໄຈທີ່ຄົນສ້າງຂື້ນແບບຮອບດ້ານຢ່າງເຕັມສ່ວນ ຊຶ່ງມີຜົນສະທ້ອນຕໍ່ວົງຈອນຊີວິດຂອງ ອ່າງເກັບນ້ຳ ໃນ ເວລາຊອກຫາການແກ້ໄຂບັນຫາກ່ຽວກັບຊັບພະຍາກອນນ້ຳ.

ພວກເຮົາຄາດວ່າວິທີການເບິ່ງບັນຫາ "ຄວາມປອດໄພຂອງມະນຸດ" ຖ້າສົມທຽບກັບວິທີການຂອງແຕ່ລະຂະແໜງການ ຈະສາມາດສ້າງຄວາມກົມກຽວ ແບບຮອບດ້ານ ຂອງການສຶກສາຄົ້ນຄວ້າ ແລະ ຜົນໄດ້ຮັບຂອງວຽກງານຂອງພວກເຮົາ.

## 5. ກິດຈະກຳ

ກິດຈະກຳຢູ່ໃນແຜນງານ ໄດ້ປະກອບສ່ວນຕໍ່ແຕ່ລະຫົວຂໍ້, ຫລື ສ່ວນຫຼາຍແມ່ນໄດ້ປະກອບສ່ວນຕໍ່ຫຼາຍຫົວຂໍ້ຢູ່ໃນຂົງເຂດວຽກງານດັ່ງກ່າວນີ້. ຕົວຢ່າງ ທີ່ສະເໜີຢູ່ໃນທີ່ນີ້ ໄດ້ໃຫ້ທິດທາງທີ່ດີ ກ່ຽວກັບເປົ້າໝາຍຂອງການດຳເນີນວຽກງານ ແລະ ເໜັ້ນໜັກໃສ່ອົງປະກອບ ຂອງວຽກງານຂອງພວກເຮົາ.

### ການປົກຄອງບໍລິຫານນ້ຳແບບປະຊາທິປະໄຕ 2010–2012

ການສ້າງ ປະຊາທິປະໄຕ ໃນການປົກຄອງບໍລິຫານນ້ຳ ເປັນເປົ້າໝາຍລວມທີ່ສຳຄັນ ຂອງເຄືອຂ່າຍ M-POWER. ໃນການດຳເນີນວຽກງານນີ້ ພວກເຮົາໄດ້ອີງໃສ່ປະສົບການເປັນຢ່າງນ້ອຍ 5 ປີ ໃນການດຳເນີນວຽກງານຢູ່ໃນຂົງເຂດນີ້ ໂດຍການດຳເນີນວຽກງານ ຢ່າງໃກ້ສິດກັບໂຄງການໄລຍະທີ່ສອງ ຂອງແຜນງານຄວາມທ້າທາຍກ່ຽວກັບນ້ຳ ແລະ ອາຫານ (CPWF), ຊຶ່ງມີເປົ້າໝາຍ ເພື່ອເພີ່ມທະວີຜົນປະໂຫຍດທີ່ເກີດຈາກໄຟຟ້ານ້ຳຕົກ ແລະ ເພື່ອປະກອບສ່ວນ ເຂົ້າໃນການຫລຸດຜ່ອນຜົນກະທົບທາງລົບ. ໂຄງການປົກຄອງບໍລິຫານນ້ຳດັ່ງກ່າວນີ້ ແມ່ນ ໜຶ່ງໃນ ຫົກໂຄງການແບບຮອບດ້ານສຳລັບແມ່ນ້ຳຂອງ.

M-POWER ມີຄວາມຮັບຜິດຊອບ ຕໍ່ໂຄງການ ທີ່ສຸມໃສ່ວິທີທາງເພື່ອປັບປຸງຜົນປະໂຫຍດ ຊຶ່ງເກີດຈາກເຂື່ອນຢູ່ທົ່ວອ່າງໂຕ່ງແມ່ນ້ຳຂອງ ໂດຍສຸມໃສ່ວ່າຈະສາມາດຄຸ້ມຄອງ ແລະ ດຳເນີນການເຂື່ອນຄືແນວໃດ ໃນລະດັບອ່າງໂຕ່ງ. ດັ່ງນັ້ນ ວຽກງານດັ່ງກ່າວນີ້ ຈຶ່ງສຸມໃສ່ ບັນດາວຽກງານ ດ້ານການຈັດຕັ້ງ ແລະ ການປົກຄອງບໍລິຫານ ຢູ່ໃນຂະແໜງການນີ້.

ວຽກງານດັ່ງກ່າວນີ້ຈະ:

- ຕີລາຄານະໂຍບາຍ ແລະ ການປົກຄອງທີ່ມີຢູ່ໃນປະຈຸບັນ ຊຶ່ງມີຜົນສະທ້ອນຕໍ່ຜົນປະໂຫຍດ, ຄວາມຮັບຜິດຊອບ ແລະ ຄວາມສ່ຽງຈາກການກໍ່ສ້າງ ແລະ ການດຳເນີນກິດຈະການ ຂອງເຂື່ອນ ແລະ ສະໜອງຂໍ້ສະເໜີແນະນຳເພື່ອປັບປຸງ ນະໂຍບາຍ ແລະ ການປົກຄອງ ທີ່ເຫັນວ່າມີຄວາມຈຳເປັນ;
- ສຶກສາເບິ່ງວ່າຄວາມຈຳເປັນ, ຜົນປະໂຫຍດ, ຄວາມຮັບຜິດຊອບຕໍ່ນ້ຳ ແລະ ຄວາມສ່ຽງຕໍ່ຊຸມຊົນ ທີ່ຢູ່ໃຕ້ເຂື່ອນ, ຊາວນາ ແລະ ຊາວປະມົງ ທີ່ໄດ້ສະເໜີຂຶ້ນມາປຶກສາຫາລືຢູ່ໃນລະດັບ ປະຊາຊົນ ແລະ ສຶກສາຄົ້ນຄວ້າເບິ່ງວ່າ ບັນຫາດັ່ງກ່າວແມ່ນຢູ່ໃນແຜນຂອງຜູ້ຕັດສິນບັນຫາ ຫລື ບໍ່ ແລະ ຈຳເປັນຕ້ອງໄດ້ນຳເອົາການອອກແບບ, ການວາງແຜນ ແລະ ການຄຸ້ມຄອງເຂື່ອນ ມາພິຈາລະນາ ຫລື ບໍ່;
- ຢັ້ງຢືນເຖິງຂອບເຂດ ຊຶ່ງຄວາມເປັນທຳທາງດ້ານຂະບວນການ ແລະ ການແບ່ງບັນຜົນປະໂຫຍດ ຢູ່ໃນການຈັດສັນຜົນປະໂຫຍດຄວາມຮັບຜິດຊອບ ແລະ ຄວາມສ່ຽງ ທີ່ຕິດພັນກັບການດຳລົງຊີວິດການເປັນຢູ່ ແລະ ສິ່ງແວດລ້ອມ ແມ່ນໄດ້ຖືກນຳມາປຶກສາຫາລື ແລະ ຄົ້ນຄວ້າວິໄຈ ແລະ ເຈລະຈາ ໃນເວລາກໍ່ສ້າງເຂື່ອນ ແລະ ສ້າງຕັ້ງໂຄງການ; ແລະ ສະໜອງຄຳປຶກສາ ກ່ຽວກັບວິທີການທີ່ເໝາະສົມ ເພື່ອສົ່ງເສີມ ຄວາມເປັນທຳຢູ່ໃນການວາງແຜນ ແລະ ການຄຸ້ມຄອງການດຳເນີນງານຂອງອ່າງເກັບນ້ຳ;
- ສຶກສາຄົ້ນຄວ້າ ການກຳນົດ ການປົກຄອງບໍລິຫານແບບໃໝ່ ສຳລັບການດຳເນີນການ ຂອງເຂື່ອນ ໂດຍເອົາໃຈໃສ່ເປັນພິເສດຕໍ່ ການພັດທະນາທາງດ້ານການຈັດຕັ້ງ ຊຶ່ງສາມາດແກ້ໄຂບັນຫາທີ່ສຳຄັນ ດ້ວຍວິທີທາງແບບຄົບຖ້ວນ ແລະ ຮອບດ້ານ, ແລະ ມີການກະກຽມລ່ວງໜ້າ ໃນການແກ້ໄຂບັນຫາໃນລະດັບຂ້າມຊາດ; ການສຶກສາຄົ້ນຄວ້າ ການປົກຄອງບໍລິຫານ ແລະ ຜົນສະທ້ອນຂອງວຽກງານດັ່ງກ່າວຕໍ່ ລະບົບ ແລະ ການດຳເນີນງານໃນປັດຈຸບັນ ເປັນບັນຫາຕົ້ນຕໍ ຢູ່ໃນລະດັບອ່າງໂຕ່ງແມ່ນ້ຳຂອງ ຊຶ່ງໄດ້ມີການສະໜອງເອກະສານກ່ຽວກັບຂໍ້ສະເໜີແນະນຳ ເພື່ອແກ້ໄຂຊ່ອງຫວ່າງຂອງວຽກງານ ເພື່ອປັບປຸງ ການປົກຄອງ ແລະ ນະໂຍບາຍ ແລະ ຊຸກຍູ້ໃຫ້ມີການສ້າງສາຍພົວພັນລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງການປົກຄອງບໍລິຫານນ້ຳໃນລະດັບອ່າງໂຕ່ງ.

### ການປຶກສາຫາລືແບບຮອບຄອບ 2004+

M-POWER ໄດ້ຄົ້ນຄວ້າຊອກຫາ ວິທີການທີ່ເປັນທາງເລືອກ ທີ່ເປັນໄປໄດ້ ເພື່ອເຂົ້າຮ່ວມໃນການປຶກສາຫາລືຊຶ່ງພົວພັນກັບບັນຫາດ້ານພະລັງງານ, ອາຫານ ແລະ ນ້ຳ, ດ້ານການທູດ, ການເຈລະຈາ ແລະ ການ ຕັດສິນບັນຫາ ຢູ່ໃນເຂດພາກພື້ນແມ່ນ້ຳຂອງ. ແຜນງານຂອງພວກເຮົາແມ່ນຖືກຊຸກຍູ້ໂດຍຄວາມເປັນຫວ່ງເປັນໄຍ ຕໍ່ຜົນກະທົບສະເພາະ ແລະ ຜົນກະທົບລວມ ຂອງໂຄງການພັດທະນາໄຟຟ້ານ້ຳຕົກ ແລະ ຊົນລະປະທານ ຂະໜາດໃຫຍ່.

ພວກເຮົາໄດ້ດຳເນີນການປຶກສາຫາລື ແບບກວ້າງຂວາງ ໂດຍມີເປົ້າໝາຍເພື່ອໃຫ້ການປຶກສາຫາລື ທີ່ມີການເປີດກວ້າງຫຼາຍຂຶ້ນ, ລວມເອົາທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ມີການຕັດສິນບັນຫາແບບໂປ່ງໃສ ກ່ຽວກັບການພັດທະນາ ແລະ ການກຳນົດທີ່ຕັ້ງຂອງໂຄງການ ແລະ ແຜນການ ຊຶ່ງພົວພັນກັບພະລັງງານ, ອາຫານ ແລະ ນ້ຳ. ເປົ້າໝາຍດັ່ງກ່າວນີ້ ຍັງກວມເອົາການຕັດສິນບັນຫາກ່ຽວກັບ ໜ້າທີ່ ແລະ ການແບ່ງປັນຄວາມຮັບຜິດຊອບຕໍ່ຄວາມສ່ຽງ ແລະ ຜົນປະໂຫຍດທີ່ເກີດຂຶ້ນ ໂດຍເບິ່ງບັນຫາທີ່ກວ້າງຂວາງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ຂະບວນການຕັດສິນບັນຫາທີ່ດີຂຶ້ນ ແມ່ນສາມາດປະກອບສ່ວນໃນການຫລຸດຜ່ອນຜົນກະທົບທາງລົບ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງການຈັດຕັ້ງປະຕິບັດ ແລະ ການດຳເນີນກິດຈະການຂອງໂຄງການ ແລະ ແຜນການຢູ່ໃນຂົງເຂດແມ່ນ້ຳຂອງ.

M-POWER ມີຄວາມຮັບຜິດຊອບສຳລັບການ ສ້າງຕັ້ງ ແລະ ການພັດທະນາຈຸດຢືນ ຂອງພາກສ່ວນທີ່ກ່ຽວຂ້ອງ ພາຍໃຕ້ໂຄງການໄລຍະທີ່ສອງ ຂອງແຜນງານທ້າທາຍກ່ຽວກັບນ້ຳ ແລະ ອາຫານ ຊຶ່ງມີເປົ້າໝາຍເພື່ອເພີ່ມທະວີຜົນປະໂຫຍດ ທີ່ເກີດຂຶ້ນຈາກ ໄຟຟ້ານ້ຳຕົກ ແລະ ປະກອບສ່ວນເພື່ອຫລຸດຜ່ອນຜົນກະທົບທາງລົບ. ນີ້ເປັນໜຶ່ງໃນຫົກໂຄງການແບບຮອບດ້ານ ແລະ ມີສອງອົງປະກອບຂອງວຽກງານ (ການກຳນົດຈຸດຢືນຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ແລະ ການປົກຄອງບໍລິຫານ ໂຄງການໄຟຟ້ານ້ຳຕົກ).

ພວກເຮົານຳໃຊ້ຄຳນິຍາມ ຕໍ່ໄປນີ້ສຳລັບການກຳນົດຈຸດຢືນຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ. ແມ່ນອົງການຕັດສິນບັນຫາ (ແບບສະໝັກໃຈ ຫຼື ຕາມກົດໝາຍ) ຊຶ່ງລວມເອົາພາກສ່ວນທີ່ກ່ຽວຂ້ອງທີ່ແຕກຕ່າງກັນ ຊຶ່ງເຊື່ອວ່າ ມີບັນຫາບາງຢ່າງກ່ຽວກັບການຄຸ້ມຄອງຊັບພະຍາກອນ ແລະ ເຮັດໃຫ້ການເພິ່ງພາອາໃສຊຶ່ງກັນ ແລະ ກັນຂອງພວກເຂົາເຈົ້າ ສາມາດແກ້ໄຂບັນຫາ ແລະ ຮ່ວມກັນເພື່ອຕົກລົງກ່ຽວກັບຍຸດທະສາດໃນການດຳເນີນວຽກງານເພື່ອແກ້ໄຂບັນຫາດັ່ງກ່າວ. ຈຸດຢືນຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ແມ່ນຖືກສົ່ງເສີມຢ່າງກວ້າງຂວາງ ໃນນາມເປັນການຈັດຕັ້ງທີ່ສາມາດເຂົ້າຮ່ວມໃນການຄຸ້ມຄອງນ້ຳ. ພວກມັນແມ່ນແນວຄິດລິເລີ່ມອັນໃໝ່ທາງດ້ານການຈັດຕັ້ງ ເພື່ອແກ້ໄຂບັນຫາທີ່ສາມາດນຳໃຊ້ເຂົ້າໃນການຄຸ້ມຄອງນ້ຳແບບປະຊາທິປະໄຕ, ເພື່ອຄຸ້ມຄອງຄວາມສ່ຽງ ແລະ/ຫຼື ເຮັດໃຫ້ການປົກຄອງຄອງບໍລິຫານນ້ຳມີປະສິດທິພາບຫຼາຍຂຶ້ນ.

## ການປັບປຸງການປະເມີນຜົນຂອງ ໄຟຟ້ານ້ຳຕົກ 2009+

ຄວາມກ້າວໜ້າຢ່າງໄວວາ ຂອງແຜນການພັດທະນາໄຟຟ້ານ້ຳຕົກ ແລະ ການເພີ່ມຂຶ້ນຂອງຜົນປະ ໂຫຍດ ຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄວາມເປັນໄປໄດ້ສູງ ຂອງຜົນກະທົບທາງລົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ສັນຍານໃຫ້ເຫັນເຖິງຄວາມຈຳເປັນອັນຮີບດ່ວນ ຊຶ່ງຕ້ອງໄດ້ເອົາໃຈໃສ່ໃຫ້ຫຼາຍຂຶ້ນ ຕໍ່ວຽກງານໃນຂົງເຂດນີ້.

M-POWER ໄດ້ເປັນເຈົ້າການ ໃນການສະໜັບສະໜູນ ການປົກຄອງບໍລິຫານ ໄຟຟ້ານ້ຳຕົກ ແບບມີຄວາມຍືນຍົງຫຼາຍຂຶ້ນ ໂດຍຜ່ານກິດຈະການ ຂອງໂຄງການຂອງຕົນ (ການປົກຄອງບໍລິຫານໄຟຟ້ານ້ຳຕົກ ແລະ ຈຸດຢືນຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ). ການປົກຄອງບໍລິຫານໄຟຟ້ານ້ຳຕົກ ໄດ້ສຸມໃສ່ການສະເໜີ ແລະ ການພັດທະນາຄວາມສາມາດ ໃນການນຳໃຊ້ເຄື່ອງມືການປົກຄອງບໍລິຫານແບບໃໝ່ ເຊັ່ນ : ວິທີການໃນການຕີລາຄາປະເມີນຜົນຄວາມຍືນຍົງຂອງໄຟຟ້ານ້ຳຕົກ ແລະ ການໄຫລວຽນຂອງນ້ຳເພື່ອສິ່ງແວດລ້ອມ. ອົງການຮ່ວມມືເພື່ອການພັດທະນາ ສາກົນ ປະເທດ ອົດສະຕາຣີ ໄດ້ສະໜັບສະໜູນ ວຽກງານຂອງພວກເຮົາຢູ່ໃນຂົງເຂດນີ້ ຕັ້ງແຕ່ປີ 2009. ໃນປະຈຸບັນພວກເຮົາໄດ້ຂະຫຍາຍກິດຈະການຂອງຕົນຢ່າງກວ້າງຂວາງ ຢູ່ໃນປະເທດຈີນ ແລະ ສປປ ລາວ ໂດຍສ້າງຂຶ້ນບົນພື້ນຖານຄວາມພະຍາຍາມໃນການພັດທະນາຄວາມສາມາດໃນເບື້ອງຕົ້ນ ໃນຊຸມປີຜ່ານມາ ເພື່ອເຮັດໃຫ້ໄຟຟ້ານ້ຳຕົກ ມີຄວາມຍືນຍົງຫຼາຍຂຶ້ນ.

ໂດຍລວມແລ້ວ ວຽກງານດັ່ງກ່າວນີ້ແມ່ນຄາດວ່າ ຈະມີອິດທິພົນຕໍ່ວິທີທາງ ຊຶ່ງໂຄງການໄຟຟ້ານ້ຳຕົກໄດ້ຖືກອອກແບບ, ພັດທະນາ ແລະ ຄຸ້ມຄອງ. ພວກເຮົາ ຈະອຳນວຍຄວາມສະດວກ ໃຫ້ແກ່ການເຂົ້າຮ່ວມວຽກງານຢ່າງສ້າງສັນກັບ ແລະ ຮຽນຮູ້ ຈາກພາກສ່ວນທີ່ກ່ຽວຂ້ອງ (ອົງການຈັດຕັ້ງສັງຄົມ, ລັດຖະບານ, ຜູ້ພັດທະນາ ແລະ ທະນາຄານ) ກ່ຽວກັບບັນຫາ ການພັດທະນາໄຟຟ້ານ້ຳຕົກ ຢູ່ໃນເຂດພາກພື້ນແມ່ນ້ຳຂອງ.

ວຽກງານຂອງພວກເຮົາຈະຍົກສູງ ຄວາມຕື່ນຕົວກ່ຽວກັບ ແລະ ຂະບວນການທີ່ພົວພັນກັບ ວິທີການຕີລາຄາປະເມີນຜົນ ຄວາມຍືນຍົງດ້ານສິ່ງແວດລ້ອມຂອງໄຟຟ້ານ້ຳຕົກ ແລະ ວຽກງານອື່ນໆ. ພວກເຮົາຄາດຄະເນວ່າ ຈະມີຄວາມເອົາໃຈໃສ່ຕໍ່ບັນຫາໃນລະດັບຊາດ ລະດັບສາກົນ ກ່ຽວກັບບົດນຳ ແລະ ມາດຕະຖານ ໃນການພັດທະນາໄຟຟ້ານ້ຳຕົກ ແບບຍືນຍົງ ໃນຂົງເຂດນີ້.

ມັນເປັນເປົ້າໝາຍຂອງພວກເຮົາໃນການດຳເນີນງານກັບ ບໍລິສັດໄຟຟ້ານ້ຳຕົກຂະໜາດໃຫຍ່ ທີ່ດຳເນີນວຽກງານຢູ່ໃນພາກພື້ນນີ້ ເພື່ອສະແດງໃຫ້ເຫັນ ຜົນໄດ້ຮັບຢູ່ໃນຄວາມຮັບຜິດຊອບທີ່ມີຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

## ການສຳຫຼວດອານາຄົດ ຂອງພາກພື້ນແມ່ນ້ຳຂອງ 2010–2012

ໂຄງການອານາຄົດຂອງພາກພື້ນແມ່ນ້ຳຂອງ ແມ່ນການສ້າງພັນທະມິດລະຫວ່າງ ອົງການຮ່ວມມືເພື່ອພັດທະນາສາກົນ ຂອງປະເທດ ອົດສະຕາຣີ ແລະ ອົງການ CSIRO. ໂຄງການດັ່ງກ່າວນີ້ໄດ້ສຶກສາຄົ້ນຄວ້າ ການປ່ຽນແປງລະຫວ່າງນ້ຳ, ອາຫານ ແລະ ພະລັງງານ ຊຶ່ງພົວພັນກັບການຕັດສິນບັນຫາດ້ານນະໂຍບາຍ ແລະ ການລົງທຶນຢູ່ໃນເຂດເນື້ອທີ່ ຂ້າມແດນ. ວຽກງານດັ່ງກ່າວນີ້ ມີຄວາມໝາຍເພື່ອປະກອບສ່ວນໃຫ້ແກ່ການຕັດສິນບັນຫາ ແບບທາງການໃນລະດັບຊາດ ແລະ ລະດັບພາກພື້ນ ແລະ ລະຫວ່າງ ພະແນກການຕ່າງໆ.

ວຽກງານທີ່ສຸມໃສ່ພາກພື້ນແມ່ນ້ຳຂອງ ແລະ ເປັນວຽກງານ ທີ່ກວມເອົາທີມງານທີ່ປຶກສາໃນລະດັບພາກພື້ນ ແລະ ມີການສຶກສາຄົ້ນຄວ້າ 5 ກໍລະນີສຶກສາ. ການສົ່ງອອກນ້ຳຢູ່ໃນທົ່ງພຽງວຽງຈັນ (ນ້ຳງື່ມ) ໃນ ສປປ ລາວ, ການປູກຝັງໃນອານາຄົດຢູ່ເຂດອີສານ (ຕາເວັນອອກສ່ຽງເໜືອຂອງປະເທດໄທ), ຜົນກະທົບຂອງການພັດທະນາ ຕໍ່ທົ່ງເລສາບ ຂອງປະເທດກຳປູເຈຍ, ການເພີ່ມຂຶ້ນຂອງລະດັບນ້ຳທະເລ ແລະ ການດຳລົງຊີວິດໃນອານາຄົດ ຢູ່ໃນເຂດສາມຫຼ່ຽມ ແມ່ນ້ຳຂອງ ຂອງປະເທດຫວຽດນາມ ແລະ ອານາຄົດຂອງຢາງພາລາ ຂອງແຂວງຢູນານ ໃນປະເທດຈີນ.

M-POWER ໄດ້ເຂົ້າຮ່ວມໃນການກຳນົດຫລັກການຂອງໂຄງການ ແລະ ມີການເຂົ້າຮ່ວມຢ່າງເປັນເຈົ້າການໃນທີມງານ ຈັດຕັ້ງປະຕິບັດວຽກງານ ໃນລະດັບພາກພື້ນ ແລະ ລະດັບຊາດ ຊຶ່ງມີຄວາມຮັບຜິດຊອບໃນການສ້າງສາຍພົວພັນກັບ ຜູ້ຕັດສິນບັນຫາ ແລະ ຜູ້ດຳເນີນວຽກງານທີ່ສຳຄັນ.

ໂຄງການໄດ້ສຶກສາຄົ້ນຄວ້າ ເສັ້ນທາງໂຄຈອນ ທີ່ເປັນໄປໄດ້ໃນອານາຄົດ ໃນການເຊື່ອມຕໍ່ ທາງດ້ານພະລັງງານ, ອາຫານ ແລະ ນ້ຳ ຢູ່ໃນເຂດພາກພື້ນແມ່ນ້ຳຂອງ. “ການເຊື່ອມຕໍ່ກັນ” ຖືກໃຫ້ນິຍາມວ່າ ເປັນການພົວພັນທີ່ມີການປ່ຽນແປງ ລະຫວ່າງ ສາມຂະແໜງການ ແທນທີ່ຈະເປັນການເຂົ້າໃຈບັນຫາຂອງແຕ່ລະຂະແໜງການສະເພາະຕ່າງຫາກ. ການວິໄຈການເຊື່ອມຕໍ່ກັນ ຂອງສາມຂະແໜງການຢູ່ໃນພາກພື້ນແມ່ນ້ຳຂອງ ໄດ້ດຳເນີນໄປ ໂດຍມີການພິຈາລະນາ ບັນຫາສະເພາະຂອງປະເດັນທີ່ເປັນຕົວນຳພາ ໃນການເພີ່ມການສຶກສາຄົ້ນຄວ້າບັນຫາ ໃນລະດັບພາກພື້ນ ຂອງການລົງທຶນໃນລະດັບຂ້າມຊາດ, ການປ່ຽນແປງດິນຟ້າອາກາດ, ການປ່ຽນແປງໃນການນຳໃຊ້ທີ່ດິນແບບໄວວາ ແລະ ການຂະຫຍາຍຕົວເມືອງ.



Fish products remain central to nutrition and economies throughout the Mekong Region
Photo: Lisa Robins

## Twin2Go - ແມ່ນ້ຳຂອງ 2010

ໂຄງການ Twin2Go ມີການທົບທວນ, ສັງລວມ ແລະ ວິໄຈການສຶກສາຄົ້ນຄວ້າ ກ່ຽວກັບການຄຸ້ມຄອງ ຊັບພະຍາກອນແຫລ່ງນ້ຳ ແບບມີການປັບຕົວ ແລະ ຮ່ວມມືແບບຮອບດ້ານ ຢູ່ໃນອ່າງນ້ຳໃນທົ່ວໂລກ. ເປົ້າໝາຍແມ່ນເພື່ອຖອດຖອນບົດຮຽນທີ່ພົວພັນກັບນະໂຍບາຍ ແລະ ການສຶກສາຄົ້ນຄວ້າ ກ່ຽວກັບບັນຫາທີ່ເກີດຂຶ້ນອ້ອມຮອບ ການປັບຕົວ ການປົກຄອງບໍລິຫານນ້ຳ ໂດຍເບິ່ງບັນຫາກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ຖ່າຍທອດບົດຮຽນດັ່ງກ່າວ ໃຫ້ແກ່ອ່າງ ໂຕ່ງແຫ່ງອື່ນ.

ອົງປະກອບທີ່ສຳຄັນຂອງໂຄງການດັ່ງກ່າວນີ້ ແມ່ນເພື່ອສ້າງຖານຂໍ້ມູນ ຊຶ່ງສາມາດອະທິບາຍບັນຫາ 96 ດ້ານທີ່ແຕກຕ່າງກັນ ຂອງການປົກຄອງບໍລິຫານນ້ຳ ຢູ່ໃນອ່າງໂຕ່ງ 29 ແຫ່ງຢູ່ທະວີບເອີຣົບ, ອາຊີ, ອາເມລິກາລາຕິນ, ແລະ ອັບຟຣິກາ ຊຶ່ງກ່ອນໜ້ານີ້ ເຄີຍເປັນພາກສ່ວນໜຶ່ງຂອງໂຄງການຄູ່ແຝດຂອງໂຕ່ງ ຢູ່ປະຊາຄົມເອີຣົບ. ຂໍ້ມູນ ໄດ້ອີງໃສ່ຄຳຖາມທີ່ເປັນມາດຕະຖານ ແລະ ການຈັດກອງປະຊຸມປຶກສາຫາລື ຂອງຜູ້ຊ່ຽວຊານ ຊຶ່ງຈັດຂຶ້ນຢູ່ທົ່ວໂລກ ໂດຍມີການມີສ່ວນຮ່ວມ ແລະ ການສືບຕໍ່ປະຕິບັດວຽກງານຫລັງຈາກກອງປະຊຸມ ເພື່ອປັບປຸງ, ກວດກາຄວາມຖືກຕ້ອງ ແລະ ຊ່ວຍໃນການຕີລາຄາການຕົກລົງບັນຫາ ຂອງຜູ້ຊ່ຽວຊານ ແລະ ຄຸນຄ່າຈາກຖານຂໍ້ມູນໃນລະດັບໂລກ. ພາກສ່ວນໜຶ່ງຂອງໂຄງການ ແມ່ນເພື່ອສັງລວມ ປະຫວັດຄວາມເປັນມາຂອງກໍລະນີສຶກສາ ທີ່ມີປະສົບການທີ່ດີເລີດ ຈາກການເຄື່ອນໄຫວວຽກງານຕົວຈິງຈາກທົ່ວໂລກ.

## ຄະນະຊ່ຽວຊານ 2010+

ຄະນະຊ່ຽວຊານ ສາມາດເປັນວິທີການ ທີ່ມີປະສິດທິພາບ ໃນການປັບປຸງຄວາມໂປ່ງໃສ ຂອງການຕັດສິນບັນຫາ ແລະ ຄວາມຮູ້ ຊຶ່ງໄດ້ອີງໃສ່ບັນຫາດັ່ງກ່າວນັ້ນ ຈຶ່ງເຮັດໃຫ້ມັນເກີດຂຶ້ນ. M-POWER ໄດ້ມີການລົງທຶນຢ່າງຫລວງຫລາຍ ໃສ່ຄວາມພະຍາຍາມໃນການດຳເນີນວຽກງານໃນອົງເຂດນີ້ ໂດຍຜ່ານການລິເລີ່ມໃນການສ້າງຕັ້ງ ຄະນະຊ່ຽວຊານ ແລະ ເຂົ້າຮ່ວມວຽກງານ ນຳຄະນະຊ່ຽວຊານດັ່ງກ່າວ ໃນນາມເປັນສະມາຊິກທີ່ເປັນເຈົ້າການ. ການສ້າງຕັ້ງຄະນະຊ່ຽວຊານຊຸດທຳອິດ ຂອງພວກເຮົາ ແມ່ນມີການຮ່ວມມືກັບຄະນະກຳມະການແມ່ນ້ຳຂອງສາກົນ ເພື່ອທົບທວນແຜນການໄລຍະ ສອງໃນການພັດທະນາອ່າງໂຕ່ງ. ຄະນະຊ່ຽວຊານ ໄດ້ຮວມເອົາຜູ້ຊ່ຽວຊານ ທີ່ຖືກຮັບຮູ້ໃນລະດັບສາກົນ ແລະ ໃນລະດັບພາກພື້ນ ໃນການສ້າງຕົວແບບທົດລອງ, ການຕີລາຄາປະເມີນຜົນ ດ້ານສິ່ງແວດລ້ອມ, ອຸທົກກະສາດ, ເສດຖະກິດ ແລະ ສັງຄົມ, ການວິໄຈແຕ່ລະຂໍ້ສັນນິຖານ ແລະ ການມີສ່ວນຮ່ວມຂອງປະຊາຊົນ. ແນວຄິດລິເລີ່ມຄັ້ງທີ່ສອງຂອງພວກເຮົາ ແມ່ນການສ້າງຕັ້ງທີມງານ ຜູ້ຊ່ຽວຊານທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ເພື່ອທົບທວນບົດລາຍງານ ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງບໍລິສັດ ປະເທດຈີນ ທີ່ໄດ້ວາງແຜນ ໃນການທີ່ຈະສ້າງເຂື່ອນຫຼາຍແຫ່ງຢູ່ໃນ ສປປ ລາວ. ໃນອານາຄົດ, M-POWER ມີເປົ້າໝາຍໃນການຂະຫຍາຍວຽກງານຂອງຕົນ ຢູ່ໃນອົງເຂດນີ້ ໂດຍການສະໜອງໂອກາດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຕ່າງໆ (ລັດຖະບານ, ພາກເອກະຊົນ ອົງການຈັດຕັ້ງສາກົນ) ເພື່ອປັບປຸງຄວາມ ໂປ່ງໃສ ຂອງຂໍ້ມູນ ແລະ ສະໜອງການທົບທວນບັນຫາແບບເອກະລາດທີ່ມີຄຸນນະພາບສູງ.

## ທີມງານສຳຫຼວດ 2007+

ທີມງານສຳຫຼວດ M-POWER ໄດ້ສະໜອງໂອກາດທີ່ຕື່ນເຕັ້ນ ແລະ ທ້າທາຍ ໃຫ້ແກ່ປະຊາຊົນໃນກຸ່ມຄົນຕ່າງໆ ເພື່ອໃຫ້ສາມາດເຂົ້າຮ່ວມທີມງານວິຊາການ ທີ່ມາຈາກຫຼາຍປະເທດ ແລະ ຈາກຫຼາຍພາກວິຊາ. ສະມາຊິກທີມງານຈະໄດ້ຮັບຄວາມເຂົ້າໃຈທີ່ເລິກຊຶ້ງ ກ່ຽວກັບບັນຫາການປົກຄອງບໍລິຫານນ້ຳທີ່ປະເຊີນໜ້າຢູ່ໃນຂົງເຂດນີ້, ດຳເນີນການສຶກສາຄົ້ນຄວ້າວຽກງານຕົວຈິງ ແລະ ສາມາດເຂົ້າຮ່ວມໃນເຫດການ ແລະ ການປຶກສາຫາລື ກັບມວນຊົນ.

ໂດຍໄດ້ຮັບການສະໜັບສະໜູນຈາກແຜນງານ ຄວາມທ້າທາຍກ່ຽວກັບນ້ຳ ແລະ ອາຫານ, ກອງປະຊຸມປະຈຳປີຂອງພວກເຮົາໄດ້ມີການເຊື້ອເຊີນເອົາຂໍ້ສະເໜີ ຈາກນັກວິຊາການໃນລະດັບມືອາຊີບ, ນັກສຶກສາຄົ້ນຄວ້າ, ພະນັກງານຂອງລັດ ແລະ ພາກສ່ວນອື່ນ ທີ່ມີຄວາມສົນໃຈໃນວຽກງານ ຢູ່ພາກພື້ນແມ່ນ້ຳຂອງລວມທັງການປົກຄອງບໍລິຫານ ແມ່ນ້ຳດັ່ງກ່າວນີ້ໃນອານາຄົດ. ພວກເຮົາຄາດວ່າ ແຜນງານສຶກສາຄົ້ນຄວ້າດັ່ງກ່າວນີ້ ຈະສາມາດສືບຕໍ່ດຶງດູດທຶນຮອນເພີ່ມເຕີ່ມ ແລະ ສາມາດຂະຫຍາຍວຽກງານໃຫ້ກວມເອົາຂອບເຂດ ຄຳຖາມກ່ຽວກັບການສຶກສາຄົ້ນຄວ້າໃນປະຈຸບັນ ພ້ອມທັງການພັດທະນາຄວາມສາມາດຢູ່ໃນ M-POWER ເພື່ອເປັນເຈົ້າພາບຮັບຕ້ອນຜູ້ເຂົ້າຮ່ວມການສຶກສາຄົ້ນຄວ້າ ແລະ ສະໜອງການສະໜັບສະໜູນແບບຕໍ່ເນື່ອງ ເພື່ອສ້າງເຄືອຂ່າຍ ທີ່ມີການຈັດປະຊຸມປະຈຳປີ. ແຜນການຄົ້ນຄວ້າດັ່ງກ່າວນີ້ ໄດ້ຖືກນຳພາໂດຍການຮ່ວມມືລະຫວ່າງ ສະຖາບັນເຕັກໂນໂລຢີຂອງ ອາຊີ່ຽນ, ມະຫາວິທະຍາໄລ ຢູນານ ແລະ ມະຫາວິທະຍາໄລ ອຸບົນລາດສະຖານີ ໂດຍເປັນຕົວແທນໃຫ້ແກ່ເຄືອຂ່າຍຂອງ M-POWER.

## ການຊອກຫາແຫລ່ງທຶນ

ໃນເບື້ອງຕົ້ນ M-POWER ໄດ້ຮັບການສະໜັບສະໜູນ ໂດຍຄວາມພະຍາຍາມ ແລະ ທຶນຮ້ອນຂອງສະມາຊິກຂອງຕົນ, ທັງໃນນາມບຸກຄົນ ແລະ ການຈັດຕັ້ງ ແລະ ທັງຈາກໃນ ແລະ ນອກ ພາກພື້ນແມ່ນ້ຳຂອງ. ພວກເຮົາດຳເນີນການ ເພື່ອລະດົມທຶນສະເພາະຕ່າງຫາກ ສຳລັບໂຄງການຊຶ່ງແຕ່ລະໂຄງການ ມີເງື່ອນໄຂກ່ຽວກັບການຈັດຕັ້ງປະຕິບັດວຽກງານ ແລະ ການລາຍງານເປັນຂອງຕົນເອງ.

ມາຮອດປະຈຸບັນ ພວກເຮົາໄດ້ຮັບການຊ່ວຍເຫລືອທາງດ້ານການເງີນ ແລະ ວິຊາການ ຈາກບັນດາຜູ້ທີ່ໃຫ້ທຶນ ແລະ ບັນດາເພື່ອນຮ່ວມງານຕ່າງໆ, ເປັນຕົ້ນແມ່ນ Echel Eau (ຂອງປະເທດ ຝຣັ່ງ), ກອງທຶນສາກົນເພື່ອ ກະສິກຳ ແລະ ການພັດທະນາ, ອົງການຮ່ວມມືເພື່ອການພັດທະນາສາກົນ ຂອງປະເທດ ອົດສະຕາຣີ, ໂດຍຜ່ານແຜນງານທ້າທາຍວ່າດ້ວຍນ້ຳ ແລະ ອາຫານ, ກອງທຶນ Blue Moon ແລະ ອົງການຮ່ວມມືເພື່ອການພັດທະນາສາກົນຂອງປະເທດ ສະວີເດັນ

## 6. ການເຂົ້າຮ່ວມວຽກງານໃນ M-POWER

ໝວດນີ້ ໄດ້ຊີ້ໃຫ້ເຫັນ ລະບົບປົກຄອງບໍລິຫານ ຂອງ ເຄືອຂ່າຍຂອງ M-POWER ແລະ ວິທີທາງຊຶ່ງການຈັດຕັ້ງ ແລະ ບຸກຄົນສາມາດເຂົ້າຮ່ວມວຽກງານໄດ້.

ມີຫຼາຍວິທີທາງ ໃນການເຂົ້າຮ່ວມວຽກງານກັບ M-POWER ແລະ ແຜນງານຂອງອົງການດັ່ງກ່າວນີ້ ໃນການເຮັດໃຫ້ເກີດປະຊາທິປະໄຕ ໃນການປົກຄອງບໍລິຫານນ້ຳຢູ່ໃນພາກພື້ນແມ່ນ້ຳຂອງ. ເອກະສານໃນໝວດນີ້ ໄດ້ຊີ້ໃຫ້ເຫັນ ວິທີທາງທີ່ເປັນທາງການ ແລະ ບໍ່ເປັນທາງການ ໃນການປະກອບສ່ວນ ແລະ ເຂົ້າຮ່ວມວຽກງານຂອງພວກເຮົາ ແລະ ວຽກງານທີ່ກ່ຽວຂ້ອງ ໃນນາມເປັນນັກສຶກສາຄົ້ນຄວ້າ, ຜູ້ອຳນວຍຄວາມສະດວກໃນການປຶກສາຫາລື ຫລື ເປັນນາຍໜ້າທາງດ້ານຄວາມຮູ້.

**ການເປັນເພື່ອນຮ່ວມງານ:** ຄະນະກຳມະການກວດກາ ຍິນດີຮັບເອົາຄຳຮ້ອງໃນການເຂົ້າຮ່ວມເປັນສະມາຊິກໃນເຄືອຂ່າຍ M-POWER ຈາກອົງການຈັດຕັ້ງ ທີ່ມີຄວາມເປັນເຈົ້າການ ໃນການດຳເນີນວຽກງານ ກ່ຽວກັບບັນຫາການປົກຄອງບໍລິຫານນ້ຳ ຢູ່ໃນພາກພື້ນແມ່ນ້ຳຂອງ.

ການສະເໜີຂໍທຶນເພື່ອການສຶກສາ. ພວກເຮົາເຊື່ອເຊີນໃຫ້ມີການສະເໜີຈາກ ນັກວິຊາຊີບ, ນັກສຶກສາຄົ້ນຄວ້າ, ພະນັກງານຂອງລັດຖະບານ ແລະ ບຸກຄົນອື່ນ ທີ່ມີຄວາມສົນໃຈຢູ່ໃນເຂດພາກພື້ນແມ່ນ້ຳຂອງ, ການຄຸ້ມຄອງເຂດນີ້ ແລະ ອານາຄົດ ຂອງເຂດນີ້ ແລະ ຊອກຫາຂໍ້ມູນກ່ຽວກັບກອງປະຊຸມປະຈຳປີຂອງພວກເຮົາ ຊຶ່ງມີການປຶກສາຫາລື ກ່ຽວກັບການສຶກສາຄົ້ນຄວ້າໃນປະຈຸບັນ ແລະ ໃນອາດີດ ຂອງນັກຄົ້ນຄວ້າຂອງ M-POWER.

**ອາສາສະໝັກ:** ພວກເຮົາຍິນດີ ຮັບຕ້ອນນັກວິຊາການ ທີ່ມີຈຸດປະສົງໃນການດຳເນີນວຽກງານຮ່ວມກັບເຄືອຂ່າຍຂອງ M-POWER ໃນການເປັນອາສາສະໝັກ ດ້ານຄວາມສາມາດໃດໜຶ່ງ ຈາກຫຼາຍຂະແໜງວິຊາຊີບ.

**ເຫດການ:** ປະຕິທິນ ທີ່ມີການປ່ຽນແປງ ກ່ຽວກັບເຫດການ ແລະ ກິດຈະກຳຕ່າງໆ ຢູ່ໃນພາກພື້ນແມ່ນ້ຳຂອງ ແລະ ນອກເໜືອຈາກນັ້ນ ທີ່ພົວພັນກັບແຜນງານຂອງ M-POWER ເຊັ່ນ: ກອງປະຊຸມປະຈຳປີ, ກອງປະຊຸມໃຫຍ່, ການເປີດຕົວ ແລະ ການຈັດກອງປະຊຸມກ່ຽວກັບປຶ້ມວິຊາການ.

### ການຄຸ້ມຄອງເຄືອຂ່າຍ

M-POWER ແມ່ນເຄືອຂ່າຍທີ່ມີການແຈກຢາຍ ການຮ່ວມມືທາງດ້ານການຈັດຕັ້ງ ແລະ ບຸກຄົນ ພວກເຮົາໄດ້ມີຈຸດປະສົງໃນການແບ່ງປັນໜ້າທີ່ ແລະ ຄວາມຮັບຜິດຊອບໃຫ້ແກ່ບັນດາເພື່ອນຮ່ວມງານ. ໜ້າທີ່ຄວາມຮັບຜິດຊອບໃນທົ່ວເຄືອຂ່າຍໄດ້ມີການປ່ຽນແປງ ແລະ ຈະສືບຕໍ່ປ່ຽນແປງໃນແຕ່ລະໄລຍະ, ທັງຕອບສະໜອງກັບຄວາມສາມາດທີ່ມີຢູ່ໃນປະຈຸບັນ ແລະ ການພັດທະນາຄວາມສາມາດແບບໃໝ່. ພວກເຮົາມີສອງອົງປະກອບທີ່ສຳຄັນ ເພື່ອຄຸ້ມຄອງເຄືອຂ່າຍຂອງພວກເຮົາ ເຊັ່ນ ຄະນະກຳມະການຊີ້ນຳ ແລະ ຜູ້ປະສານງານ M-POWER.

### ຄະນະກຳມະການຊີ້ນຳ M-POWER

ຄະນະກຳມະການຊີ້ນຳ ມີຄວາມຮັບຜິດຊອບຕົ້ນຕໍ ໃນການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນງານລວມ ແລະ ເປັນຕົວແທນໃຫ້ແກ່ M-POWER ຢູ່ໃນກອງປະຊຸມຢູ່ໃນລະດັບພາກພື້ນ. ຄະນະກຳມະການກຳນົດທິດຊີ້ນຳ ແລະ ຄຳປຶກສາທາງດ້ານຍຸດທະສາດ ຕໍ່ການດຳເນີນການທີ່ສຳຄັນ ຊຶ່ງຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ໂດຍຜູ້ປະສານງານ ແລະ ໂຄງການ M-POWER.

ການຕົກລົງບັນຫາທີ່ສຳຄັນ ທີ່ເປັນໜ້າຮັບຜິດຊອບຂອງຄະນະກຳມະການຊີ້ນຳ ມີດັ່ງນີ້:

- ຮັບຮອງເອົາການສະເໜີ ຫລື ໂຄງການ ຊຶ່ງຖືເປັນວຽກງານທາງການ ຂອງເຄືອຂ່າຍ;
- ຄັດເລືອກ ແລະ ពິລາຄາ ຜົນຂອງການດຳເນີນວຽກງານ ຂອງນັກສຶກສາຄົ້ນຄວ້າ;
- ຮັບຮອງ ແລະ ກວດກາ ການຄຸ້ມຄອງງົບປະມານຂອງໂຄງການ;
- ແກ້ໄຂຂໍ້ຂັດແຍ່ງລະຫວ່າງ ເຄືອຂ່າຍ ເຊັ່ນ: ລະຫວ່າງ ຜູ້ໄດ້ຮັບທຶນໃນການສຶກສາຄົ້ນຄວ້າ ແລະ ປະເທດເຈົ້າພາບ;
- ຮັບຮອງແຜນງານປະຈຳປີ ແລະ ລາຍງານ ໃຫ້ແກ່ຜູ້ໃຫ້ທຶນ ກ່ອນມີການເປີດເຜີຍແຜນງານດັ່ງກ່າວ;
- ຮັບຮອງການປ່ຽນແປງ ວ່າ ເຄືອຂ່າຍຈະຖືກເປັນຕົວແທນ ແລະ ປົກຄອງບໍລິຫານ ຄືແນວໃດ.

ຄະນະກຳມະການຊີ້ນຳ ຈະມີການສື່ສານຕົ້ນຕໍ ໂດຍທາງ ອີແມວ, skype ແລະ ໂທລະສັບ ໂດຍມີການປະຊຸມຊຶ່ງໜ້າ ຊຶ່ງຈະຈັດຂຶ້ນໃນແຕ່ລະປີ ຄຽງຄູ່ກັບກອງປະຊຸມເຄືອຂ່າຍປະຈຳປີ. ກອງປະຊຸມເພີ່ມເຕີມສາມາດຈັດຂຶ້ນໄດ້ ຖ້າມີຄວາມຈຳເປັນ. ໃນເວລາມີຄວາມຈຳເປັນ, ສະມາຊິກຄະນະຊີ້ນຳ ຈະລົງຄະແນນສຽງ ເພື່ອຕົກລົງບັນຫາ ແລະ ການຕົກລົງບັນຫາແຕ່ລະຄັ້ງ ຕ້ອງມີການຮັບຮອງດ້ວຍສຽງສ່ວນຫຼາຍ.

ສະມາຊິກຂອງຄະນະຊີ້ນຳ ຖືກສະເໜີລາຍຊື່ ແລະ ຮັບຮອງໂດຍຄະນະຊີ້ນຳ. ອາຍຸການ ຂອງພວກເຂົາເຈົ້າໂດຍທົ່ວໄປ ແມ່ນ 2 ຫາ 3 ປີ ແລະ ສາມາດຕໍ່ໄດ້ໂດຍບໍ່ມີກຳນົດ. ການຍົກຍ້າຍຕຳແໜ່ງແບບເປັນປະຈຳຂອງຜູ້ທີ່ເປັນສະມາຊິກຄະນະກຳມະການຊີ້ນຳ ເປັນສິ່ງທີ່ຊຸກຍູ້ໃຫ້ດຳເນີນການ ແຕ່ມີການນຳໃຊ້ຄວາມພະຍາຍາມໃນທຸກດ້ານ ເພື່ອຮັບປະກັນ ໃຫ້ມີຕົວແທນມາຈາກ ຢ່າງນ້ອຍ 5 ປະເທດ ຂອງ 6 ປະເທດ ແມ່ນ້ຳຂອງ ແລະ ຕົວແທນມາຈາກພາກພື້ນອື່ນ. ທີມງານທີ່ເປັນຜູ້ນຳພາຂອງພວກເຮົາ ໄດ້ນຳຄວາມຮູ້ ແລະ ປະສົບການອັນອຸດົມສົມບູນ ເພື່ອມາແກ້ໄຂ ການສ້າງປະຊາທິປະໄຕ ໃນການປົກຄອງບໍລິຫານນ້ຳ.

ປະຈຸບັນສະມາຊິກຂອງ ຄະນະກຳມະການຊີ້ນຳລວມມີ:

- Bach Tan Sinh, National Institute for Science & Technology Policy & Strategic Studies, Vietnam
- Bernadette Resurreccion, Asian Institute of Technology, Thailand
- Chayanis Krittasudthacheewa, Stockholm Environment Institute, Thailand
- Dipak Gyawali, Nepal Academy of Science and Technology, Nepal
- John Dore, AusAID, Lao PDR
- Kanokwan Manorom, Ubon Ratchathani University, Thailand
- Kate Lazarus, Challenge Program on Water and Food, Lao PDR
- Lilao Bouapao, Independent Researcher, Lao PDR
- Louis Lebel, Chiang Mai University, Thailand
- Lu Xing, Yunnan University, China
- Marko Keskinen, Aalto University, Finland
- Pech Sokhem, Hatfield Consultants, Canada (Chair)
- Surichai Wun'gaeo, Chulalongkorn University, Thailand
- Yang Saing Koma, Centre d'Etude et de Dévelopement Agricole Cambodgien, Cambodia

ໄລຍະທີ່ຜ່ານມາສະມາຊິກ ຂອງຄະນະກຳມະການຊີ້ນຳລວມມີ:

- Francois Molle, Institut de Recherche pour le Développement, and International Water Management Institute, Syria
- Xu Jianchu, World Agroforestry Centre, China

## ຜູ້ປະສານງານ M-POWER

ຜູ້ປະສານງານ M-POWER ມີຄວາມຮັບຜິດຊອບ ເພື່ອຮັບປະກັນວ່າ ວຽກງານຂອງບັນດາສະມາຊິກ ໄດ້ມີການປະສານງານ ແລະ ຄຸ້ມຄອງດີ ແລະ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການສື່ສານ ແລະ ວຽກງານລະຫວ່າງສະມາຊິກຂອງເຄືອຂ່າຍ. ຜູ້ປະສານງານຕ້ອງມີ ເວັບໄຊ ແລະ ບັນຊີສຳລັບ ເຄືອຂ່າຍເພື່ອສະໜອງຂໍ້ມູນກ່ຽວກັບການສຶກສາຄົ້ນຄວ້າ ແລະ ແຈກຢາຍເອກະສານ ກ່ຽວກັບການສົ່ງເສີມວຽກງານ ແລະ ເອກະສານ ສຳລັບສະມາຊິກ ຂອງເຄືອຂ່າຍ.

ຫົວໜ້າໂຄງການ ມີຄວາມຮັບຜິດຊອບຕໍ່ ການຄຸ້ມຄອງ, ການບັນຊີການເງິນ ແລະ ການລາຍງານ ຂອງຕົນ ລວມທັງການສື່ສານໂດຍກົງກັບຜູ້ໃຫ້ທຶນ. ໃນການດຳເນີນວຽກງານດັ່ງກ່າວນີ້ ພວກເຂົາເຈົ້າອາດຈະມອບການຕັດສິນບັນຫາ ໃຫ້ແກ່ຄະນະກຳມະການຊີ້ນຳ ໂດຍສອດຄ່ອງກັບວິທີການທີ່ໄດ້ຕົກລົງກັນ ແລະ ຕ້ອງລາຍງານຄວາມຄືບໜ້າຂອງວຽກງານ ໃຫ້ແກ່ຜູ້ປະສານງານ ຂອງ M-POWER ແລະ ຄະນະກຳມະການຊີ້ນຳ ກ່ຽວກັບສະພາບໃນການດຳເນີນວຽກງານຂອງຕົນ.

## ການເຂົ້າຮ່ວມວຽກງານ ກັບ M-POWER

### ການເປັນຜູ້ເຂົ້າຮ່ວມວຽກງານ

M-POWER ເປັນລະບົບເຄືອຂ່າຍ ທີ່ມີການກະຈາຍເຖິງການຈັດຕັ້ງ ແລະ ບຸກຄົນ ທີ່ມີການຮ່ວມມືກັນໃນການດຳເນີນວຽກງານ. ບັນດາເພື່ອນຮ່ວມດັ່ງກ່າວນີ້ ແມ່ນໄດ້ເຂົ້າຮ່ວມການສຶກສາຄົ້ນຄວ້າວຽກງານຕົວຈິງ, ການອຳນວຍຄວາມສະດວກໃນການປຶກສາຫາລື ແລະ/ຫຼື ການເປັນສື່ກາງທາງດ້ານຄວາມຮູ້ ຢູ່ໃນຂົງເຂດການປົກຄອງບໍລິຫານນ້ຳ ຢູ່ພາກພື້ນແມ່ນ້ຳຂອງ.

ໃນການເປັນພື່ອນຮ່ວມງານຢູ່ໃນເຄືອຂ່າຍຂອງ M-POWER ໄດ້ຮັບທັງສິດ ແລະ ໜ້າທີ່. ເພື່ອຮ່ວມງານແມ່ນມີຄວາມສາມາດຕັດປັບໄດ້ ວ່າພວກເຂົາຈະເຂົ້າຮ່ວມວຽກງານ ແນວໃດ ແລະ ໃນລະດັບໃດ ກັບ ເຄືອຂ່າຍ. ໃນພາກປະຕິບັດຕົວຈິງ ມັນແມ່ນຜົນປະໂຫຍດ, ແນວຄິດລິເລີ່ມ ແລະ ການພັກດັນຂອງບຸກຄົນ ຢູ່ໃນອົງການເພື່ອນຮ່ວມງານ ທີ່ເຮັດໃຫ້ເຄືອຂ່າຍຂອງວຽກງານມີປະສິດທິພາບ.

M-POWER ເປັນຂອບເຂດຂອງເຄືອຂ່າຍ ໃນການນຳເອົາຜູ້ຮັບຜິດຊອບໃນວຽກງານ, ຊຶ່ງສາມາດແລກປ່ຽນບົດຮຽນ ແລະ ກຳນົດແນວຄວາມຄິດຄືນໃໝ່, ເພື່ອນຳໃຊ້ເຂົ້າໃນ ແລະ ດຳເນີນການສຶກສາຄົ້ນຄວ້າກັບທົ່ວບັນດາເພື່ອນຮ່ວມງານ ເພື່ອສ້າງສາຍພົວພັນ ແລະ ທັກສະ ໃນລະດັບພາກພື້ນ ເພື່ອໃຫ້ມີອິດທິພົນຕໍ່ ການກຳນົດການຈັດຕັ້ງ ແລະ ວຽກງານອື່ນໆ.

ເພື່ອນຮ່ວມງານທີ່ເປັນເຈົ້າການທີ່ສຸດ ຈະເປັນຜູ້ໄດ້ຮັບຕຳແໜ່ງ ຢູ່ໃນຄະນະກຳມະການຊີ້ນຳ ຊຶ່ງມີຄວາມຮັບຜິດຊອບສຳລັບ ການຕັດສິນບັນຫາ ທາງດ້ານຍຸດທະສາດ ຂອງເຄືອຂ່າຍ. ຄະນະກຳມະການຊີ້ນຳ ສະໜອງຈຸດຢືນທີ່ມີລັກສະນະສະເພາະ ສຳລັບການຮ່ວມມືໃນການດຳເນີນວຽກງານ ແລະ ການແລກປ່ຽນຂໍ້ມູນ ແລະ ຄວາມຮູ້ຊຶ່ງເກີດຈາກຜູ້ມີປະສົບການສູງ ແລະ ມີອິດທິພົນ ຢູ່ໃນຫຼາຍຂະແໜງວິຊາຊີບ.

ບັນດາເພື່ອນຮ່ວມງານຕອບສະໜອງຄຳຄິດຄິດເຫັນ ເພື່ອປັບປຸງ ແລະ ປະຕິບັດວຽກງານ ຕາມທິດທາງ ທາງດ້ານຍຸດທະສາດ ຂອງເຄືອຂ່າຍ ຊຶ່ງຖືກຈັດຕັ້ງຂຶ້ນ, ໃນປະຈຸບັນ ແມ່ນບົດນຳດ້ານຍຸດທະສາດຂອງ M-POWER 2011 ສະບັບປັງປຸງ. ກອງປະຊຸມປະຈຳປີຂອງ M-POWER ແມ່ນເຫດການທີ່ສຳຄັນ ໃນແຜນການທີ່ກຳນົດໄວ້. ໃນເວລາດຽວກັນທີ່ພວກເຮົາຕ້ອງຊອກຫາແຫລ່ງທຶນເພື່ອສະໜັບສະໜູນ ຄ່າໃຊ້ຈ່າຍຂອງກອງປະຊຸມ, ໄດ້ມີການສັນນິຖານວ່າ ບັນດາເພື່ອຮ່ວມງານ ຈະມີຊັບພະຍາກອນຈາກການຈັດຕັ້ງ ແລະ ໂຄງການ ຊຶ່ງຕົນສາມາດຖອນມານຳໃຊ້ໄດ້.

ບັນດາເພື່ອນຮ່ວມງານອາດຈະຖືກຂໍຮ້ອງເພື່ອໃຫ້ ຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ຄວາມຮັບຜິດຊອບໃດໜຶ່ງ. ການແບ່ງປັນໜ້າທີ່ຮັບຜິດຊອບ ໃນເຄືອຂ່າຍ ແມ່ນໄດ້ມີການປ່ຽນແປງ ແລະ ຈະສືບຕໍ່ປ່ຽນແປງ ໃນຕໍ່ໜ້າ ເພື່ອຕອບສະໜອງຕໍ່ຄວາມສາມາດທີ່ມີໃນປະຈຸບັນ ແລະ ການພັດທະນາຄວາມສາມາດໃໝ່ໃນອານາຄົດ.

ພວກເຮົາຮັບຮູ້ເຖິງລະດັບ ທີ່ບັນດາເພື່ອນຮ່ວມງານສາມາດ ດຳເນີນການ ແລະ ເຂົ້າຮ່ວມວຽກງານຢ່າງເປັນເຈົ້າການ ຊຶ່ງຖືກກຳນົດຢູ່ໃນ ຫລື ສອດຄ່ອງກັບ ບົດນຳທາງດ້ານຍຸດທະສາດຂອງພວກເຮົາ ແມ່ນມີຄວາມແຕກຕ່າງກັນ. ບາງເພື່ອນຮ່ວມງານ ແມ່ນມີຄວາມສຳຄັນໃນການສ້າງເຄືອຂ່າຍ ແລະ ຖານຄວາມຮູ້ຂອງເຄືອຂ່າຍໃນປະຈຸບັນ ແລະ ທຶນທາງດ້ານສັງຄົມ ຊຶ່ງເປັນຜູ້ຢູ່ແນວຫລັງ ແລະ ຊຸກຍູ້ໃຫ້ແກ່ຜູ້ອື່ນ ເປັນຜູ້ນຳພາເຄືອຂ່າຍຂອງວຽກງານ ເພື່ອໃຫ້ກ້າວໄປເຖິງ ຂັ້ນຕອນຕໍ່ໄປ ຂອງການດຳເນີນວຽກງານ.

ພວກເຮົາຍິນດີຮັບເອົາຂໍ້ສະເໜີໃນການ ເຂົ້າຮ່ວມ ເປັນສະມາຊິກຂອງເຄືອຂ່າຍ M-POWER ຈາກບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນວຽກງານຢ່າງເປັນເຈົ້າການ ກ່ຽວກັບບັນຫາການປົກຄອງບໍລິຫານນ້ຳ ຢູ່ໃນຂົງເຂດແມ່ນ້ຳຂອງ. ຄຳຮ້ອງທັງໝົດຈະຖືກນຳມາພິຈາລະນາ ແລະ ຕົກລົງ ໂດຍຄະນະກຳມະການຊີ້ນຳຂອງ M-POWER.

### ກຸ່ມນັກສຶກສາຄົ້ນຄວ້າ

ນັກສຶກສາຄົ້ນຄວ້າ ທີ່ໄດ້ຮັບທຶນຈາກ M-POWER ໄດ້ມີການປະກອບສ່ວນທີ່ສຳຄັນຕໍ່ຄວາມພະຍາຍາມ ໃນການສຶກສາ ຄົ້ນຄວ້າວຽກງານຕົວຈິງ ຂອງເຄືອຂ່າຍຂອງພວກເຮົາ. ໂດຍຜ່ານແຜນງານໃຫ້ທຶນການສຶກສາຄັ້ງໃໝ່ ເລີ່ມຈາກ ປີ 2011, M-POWER ຄາດວ່າຈະໄດ້ສະໜັບສະໜູນ ນັກສຶກສາຄົ້ນຄວ້າໃໝ່ອີກ 40 ຄົນ. ແຜນງານດັ່ງກ່າວນີ້ ຈະສະໜອງການຊ່ວຍເຫລືອທາງດ້ານການສຶກສາຄົ້ນຄວ້າ ແລະ ເພື່ອສ້າງຄວາມສາມາດໃຫ້ແກ່ບຸກຄົນທີ່ມີຄວາມສົນໃຈ ໃນການສ້າງຄວາມຮູ້, ແລກປ່ຽນ ແລະ ມີອິດທິພົນທາງດ້ານນະໂຍບາຍ ຢູ່ໃນເຂດພາກພື້ນແມ່ນ້ຳຂອງ. ພວກເຮົາຍິນດີເຊື້ອເຊີນໃຫ້ມີການສະເໜີ ຂໍທຶນຈາກນັກວິຊາການ, ນັກສຶກສາຄົ້ນຄວ້າ, ພະນັກງານຂອງລັດຖະບານ ແລະ ບຸກຄົນອື່ນ ທີ່ມີຄວາມສົນໃຈຢູ່ໃນເຂດພາກພື້ນແມ່ນ້ຳຂອງ, ລວມທັງການຄຸ້ມຄອງ ແລະ ອານາຄົດຂອງເຂດດັ່ງກ່າວນີ້. ແຜນງານເພື່ອການສະໜອງທຶນ ຂອງ M-POWER ຄັ້ງທີ່ 8 ແມ່ນໄດ້ຖືກຕົກລົງ ຢູ່ໃນເວັບໄຊ ຂອງ M-POWER, ຂໍ້ມູນກ່ຽວກັບການສຶກສາຄົ້ນຄວ້າ ທີ່ໄດ້ຖືກດຳເນີນແລ້ວ ສາມາດຂໍມາຄົ້ນຄວ້າໄດ້. ເຄືອຂ່າຍສະມາຊິກຂອງພວກເຮົາເປັນຕົວແທນທີ່ສຳຄັນ ໃນການປະກອບສ່ວນຕໍ່ການພັດທະນາ ຄວາມສາມາດໃນລະດັບພາກພື້ນ ຢູ່ໃນຂົງເຂດ ການປົກຄອງບໍລິຫານນ້ຳ. ເຄືອຂ່າຍດັ່ງກ່າວນີ້ ເປັນ ນັກສຶກສາຄົ້ນຄວ້າທີ່ມີຄວາມຫ້າວຫັນ ແລະ ມີທັກສະ ຊຶ່ງຄາດຄະເນວ່າຈະມີການຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ ຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.

## ອາສາສະໝັກ

ໃນຕະຫລອດເວລາ M-POWER ຊອກຫາຜູ້ຊ່ວຍເຫລືອ ເພື່ອມີຄວາມກ້າວໜ້າ ໃນການຈັດຕັ້ງປະຕິບັດວຽກງານ ຕາມແຜນຍຸດທະສາດຂອງຕົນ. ມີການກຳນົດຂອບເຂດ ວຽກງານ ສຳລັບອາສາສະໝັກ ຊຶ່ງມີຢູ່ນຳຜູ້ປະສານງານຂອງ M-POWER ຫລື ຕິດພັນກັບອົງການຈັດຕັ້ງຂອງ ເພື່ອນຮ່ວມງານ ຫລື ກັບວຽກງານສະເພາະໃດໜຶ່ງ. ຖ້າທ່ານເປັນ ນັກວິຊາການ ທີ່ມີຄວາມຮູ້ ແລະ ຄວາມສາມາດ ຊຶ່ງພວກທ່ານຄິດວ່າມີສ່ວນພົວພັນ ກັບວຽກງານຂອງພວກເຮົາ, ພວກເຮົາຍິນດີຮັບຕ້ອນໃຫ້ທ່ານພົວພັນພວກເຮົາ ເພື່ອ ປຶກສາຫາລື ໂອກາດທີ່ເປັນໄປໄດ້ ຫລື ຊີ້ໃຫ້ເຫັນແນວຄວາມຄິດຂອງທ່ານ. ໂດຍສະເພາະແລ້ວ ພວກເຮົາດຶງດູດນັກວິຊາການຢູ່ໃນພາກພື້ນນີ້ ເພື່ອພິຈາລະນາວິທີການ ໃນການເຂົ້າຮ່ວມວຽກງານຢູ່ໃນເຄືອຂ່າຍ.

ໃນແຕ່ລະໄລຍະ ອາດຈະມີທຶນ ທີ່ສະໜອງໃຫ້ແກ່ການດຳເນີນວຽກງານ ເພື່ອສະໜັບສະໜູນອາສາສະໝັກ, ແຕ່ວ່າມັນມີຄວາມເປັນໄປໄດ້ສູງ ທີ່ທ່ານຈຳເປັນຕ້ອງໄດ້ຊອກຫາ ທຶນເພື່ອສະໜັບສະໜູນ ຕົນເອງ. ມີຫຼາຍເສັ້ນທາງ ສຳລັບການຊຸມຍູ້ໃຫ້ມີອາສາສະໝັກ ຊຶ່ງທ່ານສາມາດສຶກສາຄົ້ນຄວ້າດ້ວຍຕົນເອງ, ເຊັ່ນ : ທຶນການສຶກສາ, ອົງການອາສາສະໝັກ, ກອງທຶນພັດທະນາວິຊາຊີບ ແລະ ທຶນການສຶກສາ.

## ການເຂົ້າຮ່ວມວຽກງານ ໃນເວລາຈັດກອງປະຊຸມ ເຄືອຂ່າຍປະຈຳປີ

M-POWER ຈະມີການຈັດກອງປະຊຸມປະຈຳປີ ສຳລັບສະມາຊິກເຄືອຂ່າຍ ແລະ ແຂກທີ່ຖືກເຊີນ. ກອງປະຊຸມດັ່ງກ່າວນີ້ ໄດ້ຈັດຂຶ້ນຢູ່ໃນສະຖານທີ່ແຕກຕ່າງກັນ ໃນພາກພື້ນແມ່ນ້ຳຂອງ (ຕົວຢ່າງ : ປີ 2006 ແລະ 2007 ໄດ້ຈັດຕັ້ງທີ່ຊຽງໃໝ່, ປີ 2008 ໄດ້ຈັດຂຶ້ນທີ່ ຮ່າໂນ້ຍ, ປີ 2009 ຈັດຂຶ້ນທີ່ ຄຸນມິງ, ປີ 2010 ທີ່ພະນົມເປັນ, ປີ 2011 ທີ່ຊຽງໃໝ່) ເພື່ອສະໜອງໂອກາດສຳລັບ ການເຂົ້າຮ່ວມຂອງສະມາຊິກ ແລະ ເພື່ອການຄົ້ນຄວ້າບັນຫາ ຢູ່ທົ່ວພາກພື້ນ. ກອງປະຊຸມປະຈຳປີ ໄດ້ຊຸກຍູ້ ແລະ ລະດົມໃຫ້ຜູ້ເຂົ້າຮ່ວມມີການປຶກສາຫາລື ແລະ ແລກປ່ຽນບົດຮຽນ - ປະສົບການຂອງຕົນ ແລະ ການຮຽນຮູ້ຈາກການສຶກສາຄົ້ນຄວ້າ. ກອງປະຊຸມໄດ້ຖືກນຳໃຊ້ ເພື່ອອອກແບບ, ພັດທະນາ ແລະ ກຳນົດຜະລິດຕະພັນສະເພາະ ເຊັ່ນ: ເຄື່ອງມືຕີລາຄາປະເມີນຜົນວຽກງານ, ການສັງລວມນະໂຍບາຍ, ປື້ມວິຊາການ ແລະ ບັນຫາສະເພາະໃດໜຶ່ງ.

## 7. ຍຸດທະສາດທີ່ສຳຄັນ

ພວກເຮົາໄດ້ນຳໃຊ້ຍຸດທະສາດທີ່ສຳຄັນ 5 ປະເພດ ເພື່ອບັນລຸວິໄສທັດ ທີ່ກຳນົດໄວ້ຢູ່ໃນບົດນຳດັ່ງກ່າວນີ້. ພວກເຮົາມີຄວາມຕັດສິນໃຈ ໃນການຊຸກຍູ້ຜູ້ຕັດສິນບັນຫາ ແລະ ຜູ້ມີອິດທິພົນ ໃຫ້ເຂົ້າຮ່ວມໃນວຽກງານ, ແລກປ່ຽນຂໍ້ມູນ, ພົວພັນສື່ສານ ແລະ ພັດທະນາຜະລິດຕະພັນ ແລະ ເອກະສານສຳລັບການສຶກສາຄົ້ນຄວ້າ, ສົ່ງເສີມການສຶກສາຄົ້ນຄວ້າ ໃນລະດັບ ພື້ນຖານ ແລະ ພັດທະນາຄວາມສາມາດຢູ່ໃນພາກພື້ນນີ້.

### ການດຶງດູດຜູ້ຕັດສິນບັນຫາ ແລະ ຜູ້ມີອິດທິພົນເຂົ້າຮ່ວມວຽກງານ

M-POWER ພະຍາຍາມ ປະຕິບັດວຽກງານ ໃຫ້ເກີນກວ່າຜູ້ສັງເກດການຢູ່ໃນພາກພື້ນນີ້; ພວກເຮົາຕ້ອງການໃຫ້ການສຶກສາຄົ້ນຄວ້າຂອງພວກເຮົາສາມາດປັບປຸງວຽກງານດັ່ງກ່າວນັ້ນ. ເພື່ອດຳເນີນການດັ່ງກ່າວນີ້ ພວກເຮົາຕ້ອງເຂົ້າຮ່ວມຂະບວນການຕັດສິນບັນຫາ ຢ່າງມີຫົວຄິດປະດິດສ້າງ ກັບຜູ້ຕັດສິນ ແລະ ຜູ້ມີອິດທິພົນ ຕໍ່ການຕັດສິນບັນຫາ.

ການສຶກສາຄົ້ນຄວ້າ ມີບົດບາດສຳຄັນ ໃນຂະບວນການ ຕັດສິນບັນຫາທີ່ມີຂໍ້ມູນລ່ວງໜ້າ ແລະ ໃນບາງກໍລະນີ ອາດຈະມີການກ່າວເຕືອນ ຫລື ຊຸກຍູ້ໃຫ້ຜູ້ຕັດສິນບັນຫາ ຕັດສິນບັນຫາເພື່ອ ຫລື ຕ້ານກັບ ວິທີທາງສະເພາະໃດໜຶ່ງ. ແຕ່ວ່າ ຜູ້ຕັດສິນບັນຫາ ອາດຈະບໍ່ຢູ່ໃນຈຸດຢືນທີ່ດີຕະລອດໄປ ໃນການຕີລາຄາ ແລະ ຕີຄວາມໝາຍ ຜົນຂອງການສຶກສາຄົ້ນຄວ້າ, ໂດຍສະເພາະ ໃນເວລາທີ່ການສຶກສາຄົ້ນຄວ້າໄດ້ຖືກດຳເນີນຢູ່ນອກຂອບເຂດ ຂອງຂະບວນການໃນການດຳເນີນວຽກງານຂອງເຂົາເຈົ້າ ແລະ ບໍ່ມີການພິຈາລະນາບັນຫາສະເພາະ ແລະ ຄວາມຕ້ອງການຂອງພວກເຂົາເຈົ້າ. ການສຶກສາຄົ້ນຄວ້າຕົວຈິງ, ການປຶກສາຫາລື ແບບມີການຊຸກຍູ້ ແລະ ເຄືອຂ່າຍທາງດ້ານຄວາມຮູ້ ໄດ້ກຳນົດຈຸດຢືນສຳລັບ ການດຳເນີນວຽກງານກັບ ຜູ້ຕັດສິນບັນຫາ ແລະ ຜູ້ມີອິດທິພົນ ດ້ວຍວິທີທາງ ຊຶ່ງມີການປະສານງານກັນ, ມີການແລກປ່ຽນ ບົດຮຽນ ແລະ ສະແດງໃຫ້ເຫັນເຖິງການພົວພັນ ແລະ ການຮຽນຮູ້ຮ່ວມກັນ.

ວຽກງານດັ່ງກ່າວນີ້ ມີຄວາມສຳຄັນ ທີ່ເຮັດໃຫ້ເຄືອຂ່າຍຂອງພວກເຮົາສາມາດນຳໃຊ້ ແລະ ຂະຫຍາຍສາຍພົວພັນຂອງຕົນກັບພາກສ່ວນອື່ນ. ວຽກງານດັ່ງກ່າວນີ້ ຈະເຮັດໃຫ້ພວກເຮົາມີຄວາມສາມາດທີ່ດີຂື້ນໃນການກຳນົດ ການປະກອບສ່ວນ ອັນຈຳເປັນຂອງຕົນ ຕໍ່ສັງຄົມ ໃນເຂດແມ່ນ້ຳຂອງ. ພວກເຮົາໄດ້ສ້າງຕັ້ງສາຍພົວພັນ ກັບເພື່ອນຮ່ວມງານ ຢູ່ໃນຜູ້ທີ່ເປັນເຈົ້າການກ່ຽວກັບການປົກຄອງບໍລິຫານນ້ຳທີ່ແຕກຕ່າງກັນ ແລະ ບໍ່ໄດ້ມີການກຳນົດໃຫ້ພວກເຮົາເອງເຮັດວຽກ ກັບແຕ່ນັກສຶກສາຄົ້ນຄວ້າຜູ້ອື່ນເທົ່ານັ້ນ.

ພວກເຮົາມີຄວາມຕັດສິນໃຈໃນການອະທິບາຍ ແລະ ໃຫ້ເຫດຜົນ ຕໍ່ວຽກງານຂອງພວກເຮົາ ແລະ ພວກເຮົາມີຄວາມກຽມພ້ອມ ທີ່ຈະຖືກວິຈານ ໃນວິທີທາງທີ່ພວກເຮົາວິຈານພາກສ່ວນອື່ນ. ພວກເຮົາ ຈະສືບຕໍ່ຮັກສາການປຶກສາຫາລື ທີ່ມີຄວາມເປີດເຜີຍ ແລະ ກຳນົດການເບິ່ງບັນຫາໃນດ້ານທີ່ແຕກຕ່າງກັນ. ໃນການດຳເນີນວຽກງານດັ່ງກ່າວໃຫ້ດີທີ່ສຸດນັ້ນ ແມ່ນມີຄວາມແຕກຕ່າງກັນ ຢູ່ໃນແຕ່ລະສະຖານທີ່ ແລະ ໃນແຕ່ລະໄລຍະເວລາ, ແຕ່ພວກເຮົາຮູ້ວ່າ ຈຳເປັນ ຕ້ອງມີຫົວຄິດປະດິດສ້າງ ຖ້າວ່າພວກເຮົາຕ້ອງການໃຫ້ມີຜົນກະທົບທາງບວກ ຢ່າງສູງ ຈາກວຽກງານ. ພວກເຮົາຮູ້ວ່າ ການຂຽນເປັນສິ່ງສຳຄັນ, ແຕ່ສິ່ງເຫລົ່ານັ້ນແມ່ນບໍ່ພຽງພໍ. ພວກເຮົາຈຳເປັນຕ້ອງມີໜ້າ, ພົວພັນກັບ ແລະ ນຳໃຊ້ສື່ສານມ່ວນຊົນຕ່າງໆ ເພື່ອສົ່ງຂໍ້ຄວາມ. ພວກເຮົາຈຳຕ້ອງໄດ້ອົບຂວາຍ, ຮັບຟັງ ແລະ ສະແດງຄວາມຄິດຄວາມເຫັນ. ພວກເຮົາຈຳເປັນຕ້ອງເຂົ້າໃຈເນື້ອໃນບັນຫາຂອງຜູ້ອື່ນ ໃຫ້ດີຂື້ນ ແລະ ສົ່ງຂໍ້ຄວາມຂອງພວກເຮົາໃຫ້ແກ່ບຸກຄົນຕ່າງໆ.

### ການແລກປ່ຽນ ແລະ ການສື່ສານຂໍ້ມູນ

Mekong Research Listserve

M-POWER, ໂດຍການຮ່ວມມືກັບແຜນງານທ້າທາຍກ່ຽວກັບ ນ້ຳ ແລະ ອາຫານ, ເປັນເຈົ້າພາບໃນການຈັດບັນຊີຜູ້ເຂົ້າຮ່ວມ ເພື່ອສະໜອງເຄື່ອງມືສື່ສານໃນສອງທາງ ສຳລັບນັກສຶກສາຄົ້ນຄວ້າ ຢູ່ພາກພື້ນແມ່ນ້ຳຂອງ. ກອງປະຊຸມແມ່ນບ່ອນປຶກສາຫາລື ເພື່ອແລກປ່ຽນແຜນການສຶກສາຄົ້ນຄວ້າ ແລະ ຂໍ້ມູນທີ່ພົບເຫັນ, ຂໍ້ມູນ ແລະ ເຫດການທີ່ເປັນຂໍ້ມູນຊຶ່ງກ່ຽວກັບການພັດທະນາຢູ່ໃນພາກພື້ນແມ່ນ້ຳຂອງ. ກະລຸນາ ອີແມວເຖິງ mekong-research@googlegrouops.com ເພື່ອເຂົ້າຮ່ວມ.

ອິນເຕີເນັດ

ອິນເຕີເນັດ ເປັນເຄື່ອງມືທີ່ມີອຳນາດ ແລະ ຄຸນຄ່າ ເພື່ອເຊື່ອມຕໍ່ກັບສະມາຊິກ ຂອງ M-POWER ທີ່ມາຈາກຫລາຍປະເທດ. ອິນເຕີເນັດ ຮ່ວມກັບສື່ສານມ່ວນຊົນດ້ານອື່ນໆ ສະໜອງໂອກາດໃຫ້ແກ່ການຍົກລະດັບການສື່ສານ ແລະ ການປະສານງານ ໃນວຽກງານ ຂອງພວກເຮົາ ລວມທັງວິທີທາງໃນການປະຕິບັດ ແລະ ການປະດິດສ້າງ.

ພວກເຮົາໄດ້ມີການນຳໃຊ້ລະບົບສື່ສານ ແລະ ສື່ສານມ່ວນຊົນ ຂອງ ເວັບໄຊ ຊຶ່ງລວມເອົາສຽງ, ພາບວີດີໂອ ແລະ ພາບຖ່າຍ ແລະ ເອກະສານ. ຊັບພະຍາກອນດັ່ງກ່າວນີ້ ສາມາດເຂົ້າໄດ້ງ່າຍ ແລະ ຖືກນຳໃຊ້ໂດຍນັກສຶກສາຄົ້ນຄວ້າ ຂອງ M-POWER ແລະ ຜູ້ປະສານງານຂອງພວກເຂົາເຈົ້າ. ພວກເຮົາຄຸ້ມຄອງ ເອກະສານໂຄງການ ສ່ວນຫລາຍໂດຍຜ່ານເວັບໄຊ ດັ່ງກ່າວນີ້.

ເວັບໄຊຂອງພວກເຮົາ ເປັນໜ້າຕ່າງທາງສັງຄົມຂອງ M-POWER. ເວັບໄຊດັ່ງກ່າວນີ້ ໄດ້ມີການສ້າງຂື້ນໂດຍ ຂະຫຍາຍເນື້ອໃນຕໍ່ແຕ່ລະຫົວຂໍ້ຂອງວຽກງານຂອງພວກເຮົາ ແລະ ສະໜອງຂໍ້ມູນກ່ຽວກັບການສຶກສາຄົ້ນຄວ້າ, ເຄື່ອງມືໃນການດຳເນີນວຽກງານຕົວຈິງ ແລະ ກອງປະຊຸມ ທີ່ມີການປະສານງານກັນ ເພື່ອການປຶກສາຫາລືວຽກງານ. ພວກເຮົາມີເປົ້າໝາຍເພື່ອດຶງດູດ ຜູ້ເຂົ້ານຳໃຊ້ເວັບໄຊ ຜູ້ໃໝ່ ແລະ ຜູ້ທີ່ກັບຄືນເຂົ້າໄປໃຊ້ເວັບໄຊອີກຈາກຫລາຍພາກສ່ວນທີ່ກ່ຽວຂ້ອງ, ລວມທັງປະຊາຊົນທົ່ວໄປ. ເວັບໄຊດັ່ງກ່າວໄດ້ມີການປັບປຸງຢ່າງເປັນປະຈຳ ແລະ ມີຖານຂໍ້ມູນກ່ຽວກັບໜ້າທີ່ວຽກງານແບບໂອໂຕມະຕິກ. ພວກເຮົາຍັງໃຫ້ຂໍ້ມູນກ່ຽວກັບອົງການເພື່ອນຮ່ວມງານຂອງພວກເຮົາ.

## ການສ້າງຜະລິດຕະພັນ ແລະ ເອກະສານຕ່າງໆ

ນັກສຶກສາຄົ້ນຄວ້າຂອງ M-POWER ໄດ້ມີການຈັດພິມບົດລາຍງານ ແລະ ບົດຂຽນຂອງເຂົາເຈົ້າ ໃນຫຼາຍວິທີທາງທີ່ແຕກຕ່າງກັນ. ພວກເຮົາ ໄດ້ມີການພິມຈຳໜ່າຍປື້ມ ທີ່ມີຜູ້ແຕ່ງຫຼາຍຄົນ ຊຶ່ງລວມເອົາ 4 ສະບັບ ທີ່ໄດ້ມີການກວດສອບ ໂດຍຖືເປັນຜົນສຳເລັດຮ່ວມກັນ ຂອງການດຳເນີນວຽກງານສຶກສາຄົ້ນຄວ້າ ທີ່ກຳນົດໄວ້ຢູ່ໃນບົດນຳສະບັບນີ້. ປື້ມແຕ່ລະຊຸດ ມີເປົ້າໝາຍ ໃນການສ່ອງແສງໃຫ້ເຫັນຄວາມຫຼາກຫຼາຍ ຂອງບັນຫາໃນແຕ່ລະດ້ານ ແລະ ປະຫວັດຄວາມເປັນມາ ຂອງ ຜູ້ຂຽນ ໂດຍສຸມໃສ່ລະບົບລວມຂອງການປົກຄອງບໍລິຫານນ້ຳຢູ່ໃນພາກພື້ນແມ່ນ້ຳຂອງ. ສ່ວນຫຼາຍແລ້ວ ຜູ້ຂຽນຖອດຖອນບົດຮຽນຈາກ M-POWER, ຊຶ່ງລວມເອົານັກສຶກສາຄົ້ນຄວ້າ ການປົກຄອງບໍລິຫານ ທີ່ໜຸ່ມນ້ອຍ, ຜູ້ໄດ້ທຶນການສຶກສາ, ຜູ້ເປັນເຈົ້າການ ແລະ ຜູ້ນຳພາວຽກງານ.

ພວກເຮົາຍັງໄດ້ສ້າງເອກະສານໃນການດຳເນີນວຽກງານ ແລະ ບົດລາຍງານທາງດ້ານການເມືອງ. ເອກະສານກ່ຽວກັບການດຳເນີນວຽກງານ ເປັນການຈັດພິມທີ່ຂຽນໂດຍ ນັກສຶກສາຄົ້ນຄວ້າຂອງ M-POWER. ພວກເຮົາຄາດຄະເນວ່າສ່ວນຫຼວງຫຼາຍແລ້ວແມ່ນຈະຖືກຈັດພິມ ໃນນາມເປັນເອກະສານທີ່ມີການກວດກາໂດຍເພື່ອນຮ່ວມງານ ໃນຕະລອດໄລຍະ. ເອກະສານໃນການດຳເນີນວຽກງານ ທີ່ບໍ່ມີການຈັດພິມ ໂດຍທົ່ວໄປແລ້ວແມ່ນສາມາດສະໜອງໃຫ້ໄດ້ ຈາກຜູ້ຂຽນເອກະສານ ຕາມການຮ້ອງຂໍ. ຂ່າວທີ່ພິມເຜີຍແຜ່ ຜ່ານສື່ສານມ່ວນຊົນ ແມ່ນຖືກນຳໃຊ້ເພື່ອ ສົ່ງຂໍ້ມູນທີ່ພົບເຫັນອັນສຳຄັນ ໂດຍຜ່ານສື່ສານມ່ວນຊົນ ໃນເວລາທີ່ອົງການເພື່ອນຮ່ວມງານຂອງພວກເຮົາໄດ້ມີການເຂົ້າຮ່ວມຢ່າງເປັນເຈົ້າການໃນການສ້າງຮູບແບບການລາຍງານ ດ້ວຍວິທີການຕ່າງໆ ໂດຍຜ່ານສື່ສານມ່ວນຊົນ.

ພວກເຮົາຍັງສາມາດສ້າງສິ່ງພິມທີ່ເປັນຮູບພາບ ແລະ ສຽງ ລວມທັງຟີມຮູບເງົາ ຊຶ່ງສາມາດສະໜອງໃຫ້ແກ່ປະຊາຊົນຢ່າງກວ້າງຂວາງ. ພວກເຮົາໄດ້ສ້າງຟີມຮູບເງົາໃນນາມເປັນຜົນໄດ້ຮັບ ຂອງ ການປຶກສາຫາລື ກ່ຽວກັບນ້ຳ ໃນເຂດພາກພື້ນແມ່ນ້ຳຂອງ ຊຶ່ງໄດ້ຈັດຂຶ້ນໃນປີ 2006, ທີ່ໃສ່ຫົວຂໍ້ວ່າ:" ການຄົ້ນຄວ້າ ກ່ຽວກັບອານາຄົດຂອງນ້ຳຮ່ວມກັນ". ຟີມຮູບເງົາດັ່ງກ່າວ ສາມາດເຂົ້າເຖິງໄດ້ ໂດຍເປັນເນື້ອໃນທີ່ມີສຽງ ແລະ ພາບຢູ່ໃນເວັບໄຊ ຂອງ M-POWER.

## ການສົ່ງເສີມການສຶກສາຄົ້ນຄວ້າ ຢູ່ຂັ້ນພື້ນຖານ

ການປົກຄອງບໍລິຫານທີ່ດີ ຮຽກຮ້ອງໃຫ້ມີ ຂໍ້ມູນທີ່ມີຄຸນນະພາບສູງ ແລະ ຜ່ານການກວດກາຄວາມ ຖືກຕ້ອງ ຈາກຂັ້ນລຸ່ມ ຫາ ຂັ້ນເທິງ ແລະ ຈາກຂັ້ນເທິງສູ່ຂັ້ນລຸ່ມ ໃນທົ່ວສັງຄົມ. ມັນຮຽກຮ້ອງໃຫ້ຜູ້ຕັດສິນບັນຫາ ໃຫ້ສາມາດເຂົ້າຫາ ແລະ ໄດ້ຮັບຂໍ້ມູນຈາກ ຜູ້ເປັນເຈົ້າການຢູ່ທ້ອງຖິ່ນ. ການໄຫລຂອງຂໍ້ມູນທີ່ຖືກຕ້ອງຈາກທາງສອງດ້ານ ສາມາດເຮັດໃຫ້ສັງຄົມໄດ້ຮັບຂໍ້ມູນ ເພື່ອເຕືອນບັນຫາລ່ວງໜ້າ ກ່ຽວກັບການສະເໜີພັດທະນາໂຄງການ ແລະ ສາມາດສະໜອງຈຸດຢືນທີ່ດີ ຊຶ່ງຜູ້ຕັດສິນບັນຫາສາມາດຕົກລົງບັນຫາທີ່ກ່ຽວຂ້ອງ.

ໃນການຢືນຢູ່ເສັ້ນສາຍແດນ ລະຫວ່າງການສຶກສາຄົ້ນຄວ້າ ແລະ ການພັດທະນາ, ການສຶກສາຄົ້ນຄວ້າໃນລະດັບທ້ອງຖິ່ນ ເປັນຂະບວນການ ການສຶກສາແບບມີລະບົບຂອງຊຸມຊົນ, ໂດຍຊຸມຊົນ ແລະ ເພື່ອຜົນປະໂຫຍດຂອງຊຸມຊົນ ຊຶ່ງຮວມເອົາການເກັບກຳ ແລະ ການວິໄຈຂໍ້ມູນໂດຍປະຊາຊົນຢູ່ທ້ອງຖິ່ນ ທີ່ມີຫລາຍອາຊີບ ຊຶ່ງສາມາດຄາດຄະເນໄດ້ວ່າ: ຊີວິດການເປັນຢູ່ຂອງເຂົາເຈົ້າຈະໄດ້ຮັບຜົນກະທົບໂດຍກົງຄືແນວໃດຈາກການພັດທະນາ ແລະ ປະຕິເສດທີ່ຈະເປັນເຈົ້າການ ທີ່ກໍ່ໃຫ້ເປັນບັນຫາສ້າງຜົນກະທົບຕໍ່ຕົນເທົ່ານັ້ນ.

ເປົ້າໝາຍທີ່ສຳຄັນຕົ້ນຕໍຂອງວຽກງານ ຂອງ M-POWER ແມ່ນການໃຫ້ສິດອຳນາດແກ່ກຸ່ມຄົນທີ່ດ້ອຍໂອກາດ. ດັ່ງນັ້ນ ພວກເຮົາຕ້ອງສະໜັບສະໜູນ ແລະ ສ້າງຕັ້ງກົນໄກ ຊຶ່ງທັດສະນະ, ຄວາມຕ້ອງການ ແລະ ສິດຂອງກຸ່ມຄົນ ທີ່ມີສິດອຳນາດ ໃນການຕໍ່ລອງທາງດ້ານການເມືອງນ້ອຍ, ລວມທັງຜູ້ຍິງ, ປະຊາຊົນ ທີ່ທຸກຍາກ ຢູ່ໃນເມືອງ ແລະ ຊົນນະບົດ ແລະ ຊົນເຜົ່າສ່ວນນ້ອຍ ໄດ້ມີຕົວແທນທີ່ດີຂື້ນຢູ່ໃນການຄົ້ນຄວ້າວິໄຈ ແລະ ເຈລະຈາ ກ່ຽວກັບການນຳໃຊ້ ແລະ ການພັດທະນາຊັບພະຍາກອນນ້ຳ.

## ການຍົກລະດັບຄວາມສາມາດຢູ່ໃນລະດັບພາກພື້ນ

ສຸດທ້າຍ, M-POWER ອາດຈະຖືກຕັດສິນວ່າ: ວຽກງານມີຄວາມສຳເລັດ ຖ້າວ່າວຽກງານຂອງຕົນ ໄດ້ມີການປະກອບສ່ວນທີ່ສຳຄັນ ຕໍ່ການຍົກລະດັບຄວາມສາມາດ ຂອງບຸກຄົນ ແລະ ການຈັດຕັ້ງ ຢູ່ໃນພາກພື້ນນີ້ ເພື່ອປັບປຸງການປົກຄອງບໍລິຫານນ້ຳ. ຕໍ່ຈຸດນີ້ ພວກເຮົາມີຈຸດປະສົງໃນການເຂົ້າຮ່ວມໃນການວິໄຈ, ສະເໜີບັນຫາ ແລະ ຊຸກຍູ້ໃຫ້ມີການປ່ຽນແປງທາງດ້ານການຈັດຕັ້ງ ຊຶ່ງຈະສາມາດປັບປຸງຄວາມຮັບຜິດຊອບ ຂອງອົງການບໍລິຫານນ້ຳ ຕໍ່ປະຊາຊົນທີ່ພວກເຂົາເຈົ້າຕອ້ງໄດ້ຮັບໃຊ້ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບຈາກວຽກງານຂອງພວກເຂົາເຈົ້າ.

ພວກເຮົາຍັງຊ່ວຍ ຍົກສູງຄວາມເຂົ້າໃຈ ກ່ຽວກັບຄວາມພະຍາຍາມຂອງອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງ ທີ່ບໍ່ແມ່ນຂອງລັດ ແລະ ອົງການຈັດຕັ້ງສາກົນ ເພື່ອການສ້າງປະຊາທິປະໄຕ ໃນການປົກຄອງບໍລິຫານນ້ຳ ຢູ່ໃນອົງເຂດແມ່ນ້ຳຂອງ. ສຸດທ້າຍ ແມ່ນເພື່ອເພີ່ມທະວີ ແລະ ປະກອບສ່ວນໃຫ້ແກ່ການຂະຫຍາຍຕົວ ຂອງເຄືອຂ່າຍ ໃນລະດັບພາກພື້ນ ຂອງນັກສຶກສາຄົ້ນຄວ້າທີ່ມີຄວາມຕັດສິນໃຈຕໍ່ການຄົ້ນຄວ້າວິໄຈ ແລະ ວຽກງານທີ່ສຳຄັນ ເພື່ອສົ່ງເສີມການສ້າງປະຊາທິປະໄຕ ຂອງການປົກຄອງບໍລິຫານງານ.

## Back cover photos

From top left to right: Shawn Nance, Lisa Robins, Lisa Robins, M-POWER, Louis Lebel, Kate Lazarus, IPS















M-POWER
Mekong Program on Water
Environment and Resilience

ນັກຄົ້ນຄວ້າທີ່ດຳເນີນວຽກງານຕົວຈິງ I ມີການປຶກສາຫາລືກັບຜູ້ອຳນວຍຄວາມສະດວກ I ຄົນກາງທີ່ມີຄວາມຮູ້

www.mpowernetwork.org